ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 239 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2021

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ ກົດໝາຍ ວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 35/ສພຊ, ລົງວັນທີ 16 ພະຈິກ 2021 ກ່ຽວກັບການຮັບຮອງ ເອົາກົດໝາຍວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 15/ຄປຈ, ລົງວັນທີ 15 ທັນວາ 2021.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ ກົດໝາຍ ວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ປະທານປະເທດ

**ທອງລຸນ ສີສຸລິດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 35 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

## ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 11 ພະຈິກ 2021 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 16 ພະຈິກ 2021.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່ ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 08 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2021

# ກົດໝາຍ
# ວ່າດ້ວຍການສຳຫຼວດວັດແທກ ແລະ ສ້າງແຜນທີ່

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ, ປະສິດທິຜົນ ແລະ ທັນສະໄໝ ແນໃສ່ເຮັດໃຫ້ການສຳຫຼວດວັດແທກ ແລະ ສ້າງແຜນທີ່ ດຳເນີນໄປຢ່າງເປັນເອກະພາບ, ຖືກຕ້ອງ, ຊັດເຈນ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ການສຳຫຼວດວັດແທກ ແລະ ສ້າງແຜນທີ່

ການສຳຫຼວດວັດແທກ ແມ່ນ ຂະບວນການທາງດ້ານວິທະຍາສາດ ກ່ຽວກັບການສຶກສາຄົ້ນຄວ້າຮູບຮ່າງ ແລະ ຂະໜາດຂອງໜ່ວຍໂລກ, ການເກັບກຳຂໍ້ມູນລາຍລະອຽດສິ່ງທີ່ປາກົດຢູ່ເທິງພື້ນຜິວໂລກ ແລະ ການຄິດໄລ່ບົນພື້ນຖານການນຳໃຊ້ລະບົບຂໍ້ມູນເຄົ້າການສຳຫຼວດວັດແທກແຫ່ງຊາດ.

ການສ້າງແຜນທີ່ ແມ່ນ ຂະບວນການທາງດ້ານເຕັກນິກ ຊຶ່ງປະກອບດ້ວຍ ການອອກແບບ ແລະ ກົກແຕ່ງແຄ້ມ, ການເກັບກຳຂໍ້ມູນພູມສາດ, ການຂຽນສັນຍາລັກປະເພດ, ການສ້າງຖານຂໍ້ມູນ ແລະ ການພິມແຜນທີ່.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ເປົ້າໝາຍດ້ານພູມສາດ** ໝາຍເຖິງ ວັດຖຸສິ່ງຂອງທີ່ປາກົດໃນໂລກທີ່ເປັນຈິງ ຫຼື ຈິນຕະນາການ, ປາກົດການດົງທີ່ ຫຼື ບໍ່ຄົງທີ່ ມີທີ່ຕັ້ງພູມສາດ ຢູ່ເທິງໜ້າດິນ, ພື້ນດິນ, ໜ້ານ້ຳ, ໃນນ້ຳ, ພື້ນນ້ຳ, ນ່ານຟ້າ;
2. **ມາດຕາສ່ວນແຜນທີ່** ໝາຍເຖິງ ອັດຕາສ່ວນ ລະຫວ່າງ ໄລຍະໃນແຜນທີ່ທຽບໃສ່ໄລຍະພື້ນທີ່ຕົວຈິງ;
3. **ລະບົບຂໍ້ມູນເຄົ້າການສຳຫຼວດວັດແທກແຫ່ງຊາດ** ໝາຍເຖິງ ຮູບການສະແດງອອກທາງດ້ານຄະນິດສາດ ກ່ຽວກັບຮູບຮ່າງ ແລະ ຂະໜາດຂອງໜ່ວຍໂລກ;

4. **ຜະລິດຕະພັນການສຳຫຼວດວັດແທກ ແລະ ສ້າງແຜນທີ່** ໝາຍເຖິງ ຜົນຂອງການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຜ່ານການກວດກາ ແລະ ຢັ້ງຢືນຄຸນນະພາບ ຕາມມາດຕະຖານເຕັກນິກຂອງການສຳຫຼວດວັດແທກ ແລະ ສ້າງແຜນທີ່;

5. **ຕາໜ່າງການສຳຫຼວດວັດແທກຂັ້ນເຕັກນິກ** ໝາຍເຖິງ ຕາໜ່າງການສຳຫຼວດວັດແທກຂອງຂະແໜງການທີ່ສຳຫຼວດວັດແທກເພາະກ່າຍມາຈາກຕາໜ່າງເຄົ້າການສຳຫຼວດວັດແທກແຫ່ງຊາດ;

6. **ຂອບເຂດການປົກຄອງ** ໝາຍເຖິງ ເຂດແດນຂອງ ບ້ານ, ເມືອງ, ເທດສະບານ, ນະຄອນ, ແຂວງ, ນະຄອນຫຼວງ ແລະ ປະເທດ ຕາມການກຳນົດຂອງອົງການທີ່ມີສິດອຳນາດ;

7. **ຊື່ພູມີປະເທດ** ໝາຍເຖິງ ຊື່ເອີ້ນຕາມຈຸດພິເສດຂອງຊື່ພູມສາດ, ຊື່ອຸທົກກະສາດ, ຊື່ທໍລະນີສາດ, ຊື່ພືກສາຊາດ, ສິ່ງປຸກສ້າງ, ເຂດແດນ ແລະ ອື່ນໆ;

8. **ຊື່ພູມສາດ** ໝາຍເຖິງ ຊື່ທີ່ເອີ້ນຕາມຈຸດພິເສດພູມສັນຖານ ຂອງແຕ່ລະເຂດ ເປັນຕົ້ນ ຊື່ ພູ, ຜາ, ຖ້ຳ, ເຫວ, ທົ່ງ, ຫາດຊາຍ, ດອນ;

9. **ຊື່ອຸທົກກະສາດ** ໝາຍເຖິງ ຊື່ສະຖານທີ່ຂອງບໍລິເວນນ້ຳ ເປັນຕົ້ນ ຊື່ ແມ່ນ້ຳ, ເຊ, ແກ້ງ, ອ່າງເກັບນ້ຳ, ຫ້ວຍ, ຮ່ອງ, ຄອງ, ໜອງ, ບຶງ, ເຝືອມ, ທາມ, ບໍ່ນ້ຳ, ໜອງລະ;

10. **ຊື່ທໍລະນີສາດ** ໝາຍເຖິງ ຊື່ສະຖານທີ່ຂອງແຮ່ທາດຕ່າງໆ ທີ່ປາກົດພົ້ນເດັ່ນຢູ່ໃນບໍລິເວນໃດໜຶ່ງ ເປັນຕົ້ນ ບໍ່ ຄຳ, ເງິນ, ທອງ, ເຫຼັກ, ກົ່ວ, ຊືນ;

11. **ຊື່ພືກສາຊາດ** ໝາຍເຖິງ ຊື່ຂອງພືດພັນຊະນິດຕ່າງໆທີ່ເກີດຂຶ້ນຕາມທຳມະຊາດ ຫຼື ປູກຕາມສະຖານທີ່ຕ່າງໆ ເປັນຕົ້ນ ຊື່ປ່າ, ຊື່ພືດລົ້ມລຸກ, ຊື່ພືດຢືນຕົ້ນ;

12. **ສິ່ງປຸກສ້າງ** ໝາຍເຖິງ ວັດຖຸສິ່ງຂອງຕ່າງໆທີ່ມະນຸດສ້າງຂຶ້ນ ຢູ່ຕາມສະຖານທີ່ຕ່າງໆ ເປັນຕົ້ນ ອາຄານ, ໂຮງຮຽນ, ໂຮງໝໍ, ເຮືອນ, ຕາໜ່າງຄົມມະນາຄົມ, ຕາໜ່າງໄຟຟ້າ, ຕາໜ່າງໄທລະຄົມມະນາຄົມ, ອະນຸສອນສະຖານ, ວັດ, ໂບດ, ມັດສະຢິດ, ທາດ, ປ່າຊ້າ;

13. **ເສັ້ນຊາຍແດນແຫ່ງຊາດ** ໝາຍເຖິງ ເສັ້ນແບ່ງເຂດແດນລະຫວ່າງປະເທດ;

14. **ເສັ້ນເຂດແດນເຊື່ອມຕໍ່** ໝາຍເຖິງ ເສັ້ນຂອບເຂດການປົກຄອງລະຫວ່າງ ແຂວງກັບແຂວງ, ເມືອງກັບເມືອງ ແລະ ບ້ານກັບບ້ານ;

15. **ການພິມດ້ວຍປລອດເຕີ (Plotter)** ໝາຍເຖິງ ການພິມດ້ວຍເຄື່ອງພິມຜ່ານລະບົບຫົວສີດແຕ້ມລົງໃສ່ແຜ່ນເຈ້ຍໂດຍກົງ ດ້ວຍນ້ຳມຶກ ຫຼື ຝຸ່ນມຶກ;

16. **ການພິມດ້ວຍອັອບແຊັດ (Offset)** ໝາຍເຖິງ ການພິມແຍກສີ ດ້ວຍເຄື່ອງພິມທີ່ນ້ຳມຶກສຳພັດກັບແມ່ພິມ ແລະ ເຈ້ຍໂດຍກົງຜ່ານລູກກິ້ງ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່**

ລັດ ຊຸກຍູ້ ແລະ ສົ່ງເສີມການ ຄົ້ນຄວ້າ, ວິເຄາະ, ວິໄຈ, ພັດທະນາ ວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ດ້ວຍການນຳໃຊ້ວິທະຍາສາດ, ເຕັກໂນໂລຊີທີ່ກ້າວໜ້າ ແລະ ທັນສະໄໝ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ການສ້າງໂຄງລ່າງພື້ນຖານ, ພາຫະນະ ແລະ ວັດຖຸປະກອນ ເຂົ້າໃນວຽກງານດັ່ງກ່າວ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານຄຸ້ມຄອງໄພພິບັດ.

ລັດ ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນ, ຄົ້ນຄວ້າ, ວິໄຈ ແລະ ລົງທຶນ ໃສ່ການພັດທະນາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່.

ລັດ ຊຸກຍູ້, ສົ່ງເສີມການພັດທະນາບຸກຄະລາກອນ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ມີຄວາມຮູ້, ຄວາມສາມາດ, ມີຄວາມຊຳນານງານເປັນມືອາຊີບ ໃຫ້ສາມາດຮັບໃຊ້ວຽກງານດັ່ງກ່າວ ຢູ່ພາຍໃນ ແລະ ຕ່າງປະເທດ.

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສະໜອງຂໍ້ມູນທີ່ຖືກຕ້ອງ ໃຫ້ແກ່ການຈັດຕັ້ງເພື່ອສ້າງແຜນທີ່.

**ມາດຕາ 5 ຫຼັກການກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່**

ການເຄື່ອນໄຫວວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ຮັບປະກັນອຳນາດອະທິປະໄຕ, ຄວາມເປັນເອກະພາບ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ການຮັກສາຄວາມລັບ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
3. ຮັບປະກັນການນຳໃຊ້ຂໍ້ມູນເຄົ້າການສຳຫຼວດວັດແທກພື້ນຖານແຫ່ງຊາດ ເຂົ້າໃນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ວຽກສະເພາະຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ;
4. ຮັບປະກັນການດັດແກ້, ການສະໜອງຂໍ້ມູນ ຂ່າວສານ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຖືກຕ້ອງ, ຄົບຖ້ວນ, ຊັດເຈນ, ສະດວກ ແລະ ທັນເວລາ;
5. ປະສານສົມທົບລະຫວ່າງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ການມີສ່ວນຮ່ວມຂອງພາກສ່ວນທີ່ກ່ຽວຂ້ອງ ໃນການສຳຫຼວດວັດແທກ ແລະ ສ້າງແຜນທີ່;
6. ສອດຄ່ອງກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 6 ຄວາມຮັບຜິດຊອບກ່ຽວກັບ ການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ດຳເນີນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢູ່ ສປປ ລາວ ມີຄວາມຮັບຜິດຊອບໃນການກວດກາ ຄຸນນະພາບ ແລະ ຜະລິດຕະພັນ ການສຳຫຼວດວັດແທກ ແລະ ສ້າງແຜນທີ່ຂອງຕົນ ຕາມມາດຕະຖານເຕັກນິກ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງນຳໃຊ້ຕາໜ່າງການສຳຫຼວດວັດແທກພື້ນຖານແຫ່ງຊາດ ຕາມມາດຕະຖານເຕັກນິກທີ່ປະກາດໃຊ້ໃນແຕ່ລະໄລຍະ ແລະ ສົ່ງຂໍ້ມູນ, ຜະລິດຕະພັນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ຈຳເປັນໃຫ້ກະຊວງພາຍໃນ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພັນທະໃຫ້ການຮ່ວມມື, ອຳນວຍຄວາມສະດວກ, ສະໜອງຂໍ້ມູນ, ປົກປັກຮັກສາໂຄງລ່າງພື້ນຖານ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່.

ໃນກໍລະນີ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຫາກບໍ່ປະຕິບັດຕາມມາດຕະຖານເຕັກນິກທີ່ກຳນົດແລ້ວ ຕ້ອງຮັບຜິດຊອບຕໍ່ຜົນເສຍຫາຍທີ່ເກີດຂຶ້ນຈາກວິຊາການ ຫຼື ເຕັກນິກຂອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່.

**ມາດຕາ 7 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢູ່ ສປປ ລາວ.

**ມາດຕາ 8 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສຳຫຼວດ ວັດແທກ ແລະ ສ້າງແຜນທີ່ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ການຍົກລະດັບຄວາມຮູ້, ຄວາມ ສາມາດຂອງບຸກຄະລາກອນ ບົນພື້ນຖານການເຄົາລົບ ແລະ ປະຕິບັດຕາມນະໂຍບາຍການຕ່າງປະເທດ ຂອງ ສປປ ລາວ ແລະ ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ພາກທີ II
## ວຽກງານສຳຫຼວດວັດແທກ

**ມາດຕາ 9 ວຽກງານສຳຫຼວດວັດແທກ**

ວຽກງານສຳຫຼວດວັດແທກ ມີ ດັ່ງນີ້:

1. ການສຳຫຼວດວັດແທກພື້ນຖານແຫ່ງຊາດ;
2. ການສຳຫຼວດວັດແທກວຽກສະເພາະ;
3. ການຖ່າຍພາບ.

### ໝວດທີ 1
### ການສຳຫຼວດວັດແທກພື້ນຖານແຫ່ງຊາດ

**ມາດຕາ 10 ການສຳຫຼວດວັດແທກພື້ນຖານແຫ່ງຊາດ**

ການສຳຫຼວດວັດແທກພື້ນຖານແຫ່ງຊາດ ແມ່ນ ຂະບວນການສຳຫຼວດ, ກໍ່ສ້າງ ແລະ ວັດແທກຕາ ໜ່າງການສຳຫຼວດວັດແທກພື້ນຖານແຫ່ງຊາດ ຕາມມາດຕະຖານເຕັກນິກ ເພື່ອນຳໃຊ້ເຂົ້າໃນວຽກງານສຳຫຼວດ ວັດແທກ ແລະ ສ້າງແຜນທີ່, ກິດຈະການກໍ່ສ້າງໂຄງລ່າງພື້ນຖານ ຢ່າງເປັນລະບົບ ແລະ ເອກະພາບໃນຂອບ ເຂດທົ່ວປະເທດ.

ຕາໜ່າງການສຳຫຼວດວັດແທກພື້ນຖານແຫ່ງຊາດ ມີ ດັ່ງນີ້:

1. ຕາໜ່າງເຄົ້າການສຳຫຼວດວັດແທກແຫ່ງຊາດ;
2. ຕາໜ່າງເຄົ້າພິກັດທາງຮາບແຫ່ງຊາດ;
3. ຕາໜ່າງເຄົ້າລະດັບສູງແຫ່ງຊາດ;
4. ຕາໜ່າງແຮງດຶງດູດຂອງໜ່ວຍໂລກ;
5. ຕາໜ່າງສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ.

ມາດຕາ 11 ຕາໜ່າງເຄົ້າການສຳຫຼວດວັດແທກແຫ່ງຊາດ

ຕາໜ່າງເຄົ້າການສຳຫຼວດວັດແທກແຫ່ງຊາດ ແມ່ນ ຈຸດທີ່ຕັ້ງໃດໜຶ່ງທີ່ຢູ່ເທິງພື້ນຜິວໂລກ ທີ່ແນ່ນອນ ຊຶ່ງໄດ້ກຳນົດເປັນຈຸດກໍ່ສ້າງໂຄງລ່າງພື້ນຖານການວັດແທກ ແລະ ການວັດແທກຕາໜ່າງເຄົ້າພິກັດທາງຮາບແຫ່ງຊາດ ແລະ ຕາໜ່າງເຄົ້າລະດັບສູງແຫ່ງຊາດ ໃຫ້ສະໝ່ຳສະເໝີ, ແໜ້ນໜາ, ຖາວອນ, ມີຄວາມຊັດເຈນສູງ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກ.

ສຳລັບ ການກຳນົດຈຸດເຄົ້າພິກັດແຫ່ງຊາດ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 12 ຕາໜ່າງເຄົ້າພິກັດທາງຮາບແຫ່ງຊາດ

ຕາໜ່າງເຄົ້າພິກັດທາງຮາບແຫ່ງຊາດ ແມ່ນ ຈຸດທີ່ຕັ້ງໃດໜຶ່ງທີ່ຢູ່ເທິງພື້ນຜິວໂລກທີ່ແນ່ນອນ ຊຶ່ງໄດ້ກຳນົດເປັນຈຸດກໍ່ສ້າງໂຄງລ່າງພື້ນຖານການວັດແທກ ແລະ ວັດແທກຕາໜ່າງເຄົ້າພິກັດທາງຮາບ ແຕ່ລະຊັ້ນ ຊຶ່ງມີຫົວໜ່ວຍເປັນອົງສາ ຫຼື ແມັດ ທີ່ປົກຄຸມຢ່າງແໜ້ນໜາ ແລະ ສະໝ່ຳສະເໝີ ຕາມມາດຕະຖານເຕັກນິກແຕ່ລະຊັ້ນ.

ຕາໜ່າງເຄົ້າພິກັດທາງຮາບແຫ່ງຊາດ ປະກອບດ້ວຍ 4 ຊັ້ນ ຊຶ່ງລາຍລະອຽດຂອງແຕ່ລະຊັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 13 ຕາໜ່າງເຄົ້າລະດັບສູງແຫ່ງຊາດ

ຕາໜ່າງເຄົ້າລະດັບສູງແຫ່ງຊາດ ແມ່ນ ຈຸດລະດັບສູງໃດໜຶ່ງທີ່ຢູ່ເທິງພື້ນຜິວໂລກໂດຍທຽບໃສ່ລະດັບໜ້ານ້ຳທະເລສະເລ່ຍປານກາງ ຊຶ່ງມີຫົວໜ່ວຍເປັນແມັດ ທີ່ໄດ້ກຳນົດເປັນຈຸດກໍ່ສ້າງໂຄງລ່າງພື້ນຖານການວັດແທກ ແລະ ວັດແທກຕາໜ່າງລະດັບສູງ ແຕ່ລະຊັ້ນທີ່ສະໝ່ຳສະເໝີ ແລະ ຖືກຕ້ອງ ຕາມມາດຕະຖານເຕັກນິກແຕ່ລະຊັ້ນ.

ຕາໜ່າງເຄົ້າລະດັບສູງແຫ່ງຊາດ ປະກອບດ້ວຍ 4 ຊັ້ນ ຊຶ່ງລາຍລະອຽດຂອງແຕ່ລະຊັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

ມາດຕາ 14 ຕາໜ່າງແຮງດຶງດູດຂອງໜ່ວຍໂລກ

ຕາໜ່າງແຮງດຶງດູດຂອງໜ່ວຍໂລກ ແມ່ນ ຈຸດໃດໜຶ່ງທີ່ຢູ່ເທິງພື້ນຜິວໂລກ ຊຶ່ງໄດ້ຄ່າວັດແທກຈາກແຮງດຶງດູດຂອງໜ່ວຍໂລກ ທີ່ໄດ້ກຳນົດເປັນຈຸດກໍ່ສ້າງໂຄງລ່າງພື້ນຖານການວັດແທກ ແລະ ວັດແທກຕາໜ່າງແຮງດຶງດູດຂອງໜ່ວຍໂລກ ທີ່ຖືກຕ້ອງຕາມມາດຕະຖານເຕັກນິກ.

ມາດຕາ 15 ຕາໜ່າງສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ

ຕາໜ່າງສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ ແມ່ນ ຈຸດທີ່ຕັ້ງໃດໜຶ່ງທີ່ຢູ່ເທິງພື້ນຜິວໂລກ ທີ່ແນ່ນອນ ຊຶ່ງໄດ້ກຳນົດເປັນຈຸດກໍ່ສ້າງສະຖານີ ແລະ ວັດແທກຮັບ-ສົ່ງສັນຍານດາວທຽມ ດ້ວຍລະບົບດາວທຽມນຳພາທາງໂລກ ທີ່ສາມາດວັດແທກ ແລະ ສະໜອງຂໍ້ມູນແບບຕໍ່ເນື່ອງ ໂດຍຜ່ານສູນຄວບຄຸມ ແລະ ບໍລິການຂໍ້ມູນ ດ້ວຍລະບົບອິນເຕີເນັດ ເພື່ອນຳໃຊ້ເຂົ້າໃນທຸກວຽກງານສຳຫຼວດວັດແທກ, ຕິດຕາມແຜ່ນດິນໄຫວ, ການເໜັງຕີງ, ການເຄື່ອນຍ້າຍຂອງແຜ່ນເປືອກໂລກ ແລະ ປາກົດການອື່ນທີ່ກ່ຽວຂ້ອງ.

## ໝວດທີ 2

## ການສຳຫຼວດວັດແທກອຽກສະເພາະ

**ມາດຕາ 16 ການສຳຫຼວດວັດແທກວຽກສະເພາະ**

ການສຳຫຼວດວັດແທກວຽກສະເພາະ ແມ່ນ ຂະບວນການສຳຫຼວດວັດແທກຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ ມີຈຸດປະສົງສຳຫຼວດວັດແທກເພື່ອຮັບໃຊ້ວຽກງານສະເພາະໃດໜຶ່ງຂອງຕົນ.

ການສຳຫຼວດວັດແທກວຽກສະເພາະ ມີ ດັ່ງນີ້:

1. ການສຳຫຼວດວັດແທກກ່ຽວກັບເສັ້ນຊາຍແດນແຫ່ງຊາດ;
2. ການສຳຫຼວດວັດແທກກ່ຽວກັບເສັ້ນເຂດແດນເຊື່ອມຕໍ່;
3. ການສຳຫຼວດວັດແທກກ່ຽວກັບການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
4. ການສຳຫຼວດວັດແທກກ່ຽວກັບທີ່ດິນ;
5. ການສຳຫຼວດວັດແທກກ່ຽວກັບກະສິກຳ ແລະ ປ່າໄມ້;
6. ການສຳຫຼວດວັດແທກກ່ຽວກັບອຸທົກກະສາດ;
7. ການສຳຫຼວດວັດແທກກ່ຽວກັບເຂື່ອນ ແລະ ແລວສາຍສົ່ງໄຟຟ້າ;
8. ການສຳຫຼວດວັດແທກກ່ຽວກັບຕາໜ່າງຄົມມະນາຄົມ;
9. ການສຳຫຼວດວັດແທກກ່ຽວກັບກິດຈະການໃຕ້ດິນ;
10. ການສຳຫຼວດວັດແທກກ່ຽວກັບຄວາມສ່ຽງໄພພິບັດ;
11. ການສຳຫຼວດວັດແທກກ່ຽວກັບທໍລະນີສາດ ແລະ ແຮ່ທາດ;
12. ການສຳຫຼວດວັດແທກວຽກສະເພາະອື່ນທີ່ກ່ຽວຂ້ອງ.

ສຳລັບ ລາຍລະອຽດຂອງການສຳຫຼວດວັກແທກວຽກສະເພາະ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກຂອງຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 17 ຕາໜ່າງການສຳຫຼວດວັດແທກວຽກສະເພາະ**

ຕາໜ່າງການສຳຫຼວດວັດແທກວຽກສະເພາະ ແມ່ນ ຂະບວນການສຳຫຼວດ, ກໍ່ສ້າງ ແລະ ວັດແທກຂັ້ນເຕັກນິກຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ເພື່ອນຳໃຊ້ເຂົ້າໃນວຽກສະເພາະ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້.

ການສ້າງຕາໜ່າງສຳຫຼວດວັດແທກວຽກສະເພາະ ຕ້ອງນຳໃຊ້ຕາໜ່າງການສຳຫຼວດວັດແທກພື້ນຖານແຫ່ງຊາດ ແລະ ປະຕິບັດ ຕາມມາດຕະຖານເຕັກນິກແຫ່ງຊາດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

## ໝວດທີ 3
## ການຖ່າຍພາບ

**ມາດຕາ 18 ການຖ່າຍພາບ**

ການຖ່າຍພາບ ແມ່ນ ການບັນທຶກຂໍ້ມູນເທິງພື້ນຜິວໂລກ ດ້ວຍການຖ່າຍພາບທາງອາກາດ, ຖ່າຍພາບພື້ນດິນ ແລະ ພື້ນນ້ຳ ເພື່ອສ້າງແຜນທີ່.

**ມາດຕາ 19 ການຖ່າຍພາບທາງອາກາດ**

ການຖ່າຍພາບທາງອາກາດ ແມ່ນ ການບັນທຶກຂໍ້ມູນເທິງພື້ນຜິວໂລກ ດ້ວຍການຖ່າຍພາບຈາກດາວທຽມ, ເຮືອບິນ ແລະ ເຮືອບິນບໍ່ມີຄົນຂັບ.

ການຖ່າຍພາບຈາກດາວທຽມ ມີໜ້າວຽກ ດັ່ງນີ້:

1. ວາງແຜນວົງໂຄຈອນ ແລະ ກຳນົດພື້ນທີ່;
2. ປະມວນ ແລະ ວິເຄາະ ຂໍ້ມູນ;
3. ສຳເນົາຂໍ້ມູນ ແລະ ສ້າງແຜນທີ່ພູມສັນຖານ.

ການຖ່າຍພາບໂດຍເຮືອບິນ ແລະ ເຮືອບິນບໍ່ມີຄົນຂັບ ມີໜ້າວຽກ ດັ່ງນີ້:

1. ວາງແຜນແລວບິນ ແລະ ບິນຖ່າຍພາບ;
2. ສ້າງ ແລະ ວັດແທກຈຸດຄວບຄຸມການຖ່າຍພາບ;
3. ປະມວນ, ສຳເນົາຂໍ້ມູນ ເພື່ອສ້າງແຜນທີ່ພູມສັນຖານ ດ້ວຍພາບຖ່າຍ.

**ມາດຕາ 20 ການຖ່າຍພາບພື້ນດິນ ແລະ ພື້ນນ້ຳ**

ການຖ່າຍພາບພື້ນດິນ ແລະ ພື້ນນ້ຳ ແມ່ນ ການບັນທຶກຂໍ້ມູນເທິງໜ້າດິນ, ພື້ນດິນ ແລະ ພື້ນນ້ຳ ດ້ວຍເຄື່ອງບັນທຶກຂໍ້ມູນອັດຕະໂນມັດ.

**ມາດຕາ 21 ຄວາມຮັບຜິດຊອບກ່ຽວກັບການຖ່າຍພາບ**

ກະຊວງພາຍໃນ ເປັນຜູ້ສ້າງ ແລະ ຈັດຕັ້ງປະຕິບັດແຜນການຖ່າຍພາບທາງອາກາດ, ພື້ນດິນ ແລະ ພື້ນນ້ຳ ເພື່ອນຳໃຊ້ເຂົ້າໃນການສ້າງແຜນທີ່ໃນຂອບເຂດທົ່ວປະເທດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຖ່າຍພາບ ເພື່ອສ້າງແຜນຜັງ ແລະ ແຜນທີ່ ຕ້ອງເປັນເຈົ້າການຮັບຜິດຊອບໂດຍກົງ ໃນການສະເໜີແຜນການຖ່າຍພາບທາງອາກາດ, ພື້ນດິນ ແລະ ພື້ນນ້ຳຂອງຕົນ ຕໍ່ກະຊວງພາຍໃນ ເພື່ອພິຈາລະນາ ດ້ວຍການປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງ ແລະ ຕ້ອງປະຕິບັດຕາມແຜນການຖ່າຍພາບທາງອາກາດ, ພື້ນດິນ ແລະ ພື້ນນ້ຳ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບ ການສ້າງແຜນການຖ່າຍພາບທາງອາກາດ, ພື້ນດິນ ແລະ ພື້ນນ້ຳ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ III
# ວຽກງານສ້າງແຜນທີ່

**ມາດຕາ 22 ວຽກງານສ້າງແຜນທີ່**

ວຽກງານສ້າງແຜນທີ່ ມີ ດັ່ງນີ້:

1. ການສ້າງແຜນທີ່ພູມສັນຖານ;
2. ການສ້າງແຜນທີ່ວຽກສະເພາະ;
3. ການພິມແຜນທີ່.

## ໝວດທີ 1
## ການສ້າງແຜນທີ່ພູມສັນຖານ

**ມາດຕາ 23 ການສ້າງແຜນທີ່ພູມສັນຖານ**

ການສ້າງແຜນທີ່ພູມສັນຖານ ແມ່ນ ຂະບວນການສະແດງລາຍລະອຽດ ກ່ຽວກັບຮູບຮ່າງໜ້າດິນ, ລະດັບສູງ, ທີ່ຕັ້ງເຂດແດນຂອງ ບ້ານ, ເມືອງ, ເທດສະບານ, ນະຄອນ, ແຂວງ, ນະຄອນຫຼວງ, ຂອບເຂດການປົກຄອງ, ອຸທົກກະສາດ, ຕາໜ່າງຄົມມະນາຄົມ, ວັດຖຸທຳມະຊາດ ແລະ ສິ່ງປຸກສ້າງຕ່າງໆ ດ້ວຍລະບົບເຄື່ອງໝາຍ ຕາມມາດຕາສ່ວນ ແລະ ລະບົບເຄົ້າພິກັດໃດໜຶ່ງເທິງແຜ່ນພຽງ.

ມາດຕາສ່ວນສຳລັບແຜນທີ່ພູມສັນຖານ ມີ ສາມປະເພດ ດັ່ງນີ້:

1. ມາດຕາສ່ວນໃຫຍ່ ຊຶ່ງແມ່ນຂະໜາດຂອງແຜນທີ່ ທີ່ມີສ່ວນພູດຂອງມາດຕາສ່ວນ ແຕ່ ສິບພັນ (10 000) ລົງມາ ເປັນຕົ້ນ 1:10 000, 1:5000, 1:200;

2. ມາດຕາສ່ວນກາງ ຊຶ່ງແມ່ນຂະໜາດຂອງແຜນທີ່ ທີ່ມີສ່ວນພູດຂອງມາດຕາສ່ວນໃຫຍ່ກວ່າ ສິບພັນ (10 000) ຫາ ສອງແສນຫ້າສິບພັນ (250 000) ເປັນຕົ້ນ 1: 25 000, 1:50000, 1: 100 000;

3. ມາດຕາສ່ວນນ້ອຍ ຊຶ່ງແມ່ນຂະໜາດຂອງແຜນທີ່ ທີ່ມີສ່ວນພູດຂອງມາດຕາສ່ວນໃຫຍ່ກວ່າ ສອງແສນຫ້າສິບພັນ (250 000) ຂຶ້ນໄປ ເປັນຕົ້ນ 1: 500 000, 1:1 000 000.

**ມາດຕາ 24 ການອອກແບບ ແລະ ຕົບແຕ່ງແຕ້ມ ແຜນທີ່ພູມສັນຖານ**

ການອອກແບບ ແລະ ຕົບແຕ່ງແຕ້ມແຜນທີ່ພູມສັນຖານ ແມ່ນ ຂະບວນການກຳນົດລັກສະນະ ແລະ ສ້າງຂໍ້ມູນ, ການສ້າງຖານຂໍ້ມູນ, ການຕົບແຕ່ງແຕ້ມ ແລະ ຈັດພິມ ໂດຍມີຮູບແບບ, ສີສັນ ແລະ ເຄື່ອງໝາຍ ຫຍໍ້ຂໍ້ມູນພູມສາດ ຂອງແຕ່ລະມາດຕາສ່ວນ ຕາມມາດຕະຖານເຕັກນິກແຫ່ງຊາດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 25 ການເກັບກຳຂໍ້ມູນແຜນທີ່ພູມສັນຖານ**

ການເກັບກຳຂໍ້ມູນແຜນທີ່ພູມສັນຖານ ມີ ສອງວິທີ ດັ່ງນີ້:

1. ການເກັບກຳຂໍ້ມູນແຜນທີ່ພາກສະໜາມ ເພື່ອນຳໃຊ້ໃນການກວດກາຄວາມຖືກຕ້ອງ ຂອງຂໍ້ມູນແຜນທີ່ ທີ່ສ້າງໃໝ່ຈາກພາບຖ່າຍທາງອາກາດ, ພາບຖ່າຍດາວທຽມ, ພາບຖ່າຍພື້ນດິນ ແລະ ພື້ນນ້ຳ;

2. ການເກັບກຳ ແລະ ທ້ອນໂຮມຂໍ້ມູນຈາກການສຳຫຼວດວັດແທກພາກສະໜາມ ເພື່ອສ້າງແຜນທີ່ໃໝ່ ແລະ ກວດກາຄືນຄວາມຖືກຕ້ອງ ຕາມສະພາບຕົວຈິງໃນພື້ນທີ່ ກ່ຽວກັບຂໍ້ມູນ ຂ່າວສານ ພູມສາດ.

**ມາດຕາ 26 ການຂຽນຊື່ພູມີປະເທດ**

ການຂຽນຊື່ພູມີປະເທດ ແມ່ນ ການຂຽນຊື່ສະຖານທີ່, ເປົ້າໝາຍດ້ານພູມສາດ ແລະ ທີ່ຕັ້ງພູມສາດໃດໜຶ່ງ ເພື່ອປົກປັກ ແລະ ສ້າງຄວາມເປັນເອກະພາບໃນການເອີ້ນ, ການອ່ານ ແລະ ການຂຽນຊື່ດັ່ງກ່າວ.

ການຂຽນຊື່ພູມີປະເທດ ເປັນພາສາລາວ ແລະ ພາສາສາກົນ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ມີຊື່ໜຶ່ງຊື່ດຽວ ສຳລັບເປົ້າໝາຍດ້ານພູມສາດໃດໜຶ່ງ;
2. ກຳນົດຕາມຫຼັກພາສາສາດ, ລັກສະນະທົ່ວໄປ, ລັກສະນະເຊື່ອມໂຍງ, ລັກສະນະສືບທອດຮີດຄອງປະເພນີ ແລະ ຄວາມເຊື່ອຖືຂອງທ້ອງຖິ່ນ;
3. ມີຊື່ທີ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ຫຼື ຖືກນຳໃຊ້ໃນລະດັບສາກົນ ຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

ສຳລັບຊື່ສະຖານທີ່ທີ່ຕ້ອງຂຽນຊື່ເປັນເອກະພາບ ມີກໍລະນີ ດັ່ງນີ້:

1. ສະຖານທີ່ຢູ່ຈຸດທີ່ຕັ້ງດຽວທີ່ມີຫຼາຍຊື່ເອີ້ນ, ຫຼາຍວິທີຜັນສຽງ ຫຼື ຫຼາຍວິທີຂຽນ;
2. ສະຖານທີ່ ທີ່ເກີດຂຶ້ນໃໝ່ ຫຼື ມີການປ່ຽນແປງເປົ້າໝາຍພູມສາດທີ່ພາໃຫ້ຊື່ສະຖານທີ່ມີການປ່ຽນແປງ.

ຊື່ສະຖານທີ່ທີ່ມີການປ່ຽນແປງ ເພື່ອໃຫ້ມີຄວາມເປັນເອກະພາບໃນການນຳໃຊ້ນັ້ນ ຕ້ອງໄດ້ຮັບການປັບປຸງສ້າງເປັນຖານຂໍ້ມູນ ແລະ ປະກາດ ໃຊ້ຢ່າງເປັນທາງການ.

ກະຊວງພາຍໃນ ເປັນຜູ້ປັບປຸງຫຼັກການການຂຽນຊື່ພູມີປະເທດ ພ້ອມທັງປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 27 ການດັດແກ້ຂໍ້ມູນແຜນທີ່ພູມສັນຖານ**

ການດັດແກ້ຂໍ້ມູນແຜນທີ່ພູມສັນຖານ ແມ່ນ ການປັບປຸງຂໍ້ມູນແຜນທີ່ ໃຫ້ຖືກຕ້ອງ, ຊັດເຈນ ຕາມສະພາບການປ່ຽນແປງໃໝ່ ໃນແຕ່ລະໄລຍະຂອງພື້ນທີ່ ຊຶ່ງຕ້ອງເປັນການດັດແກ້ໃນໄລຍະ ຫ້າ ຫາ ເຈັດ ປີ ສຳລັບເຂດຕົວເມືອງ ແລະ ເຈັດ ຫາ ສິບ ປີ ສຳລັບເຂດຊົນນະບົດ ຫຼື ອີງຕາມສະພາບການປ່ຽນແປງທາງດ້ານພູມສາດ, ເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ ໂດຍແມ່ນກະຊວງພາຍໃນ ເປັນຜູ້ດັດແກ້ຂໍ້ມູນດັ່ງກ່າວ.

ການດັດແກ້ຂໍ້ມູນແຜນທີ່ພູມສັນຖານ ມີ ສອງກໍລະນີ ດັ່ງນີ້:

1. ການກວດກາ ແລະ ດັດແກ້ ການແຕ້ມຈາກພາບຖ່າຍທີ່ບໍ່ຖືກຕ້ອງໃນການໃສ່ເຄື່ອງໝາຍຫຍໍ້ຂອງຂໍ້ມູນ ລວມທັງຂະໜາດຂອງແຕ່ລະຊັ້ນເຄື່ອງໝາຍ;
2. ການດັດແກ້ຂໍ້ມູນທີ່ເປັນການປັບປຸງຂໍ້ມູນຂອງແຜນທີ່ ທີ່ມີແລ້ວ ໃຫ້ມີຄວາມຊັດເຈນ ແລະ ຖືກຕ້ອງ ຕາມສະພາບ ແລະ ເງື່ອນໄຂຕົວຈິງຂອງການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

**ມາດຕາ 28 ການສ້າງຖານຂໍ້ມູນແຜນທີ່ພູມສັນຖານ**

ການສ້າງຖານຂໍ້ມູນແຜນທີ່ພູມສັນຖານ ແມ່ນ ການກຳນົດຊັ້ນຂໍ້ມູນ ດ້ວຍເຄື່ອງໝາຍຫຍໍ້ຂອງແຕ່ລະມາດຕາສ່ວນແຜນທີ່ ຊຶ່ງປະກອບດ້ວຍຊັ້ນຂໍ້ມູນ ດັ່ງນີ້:

1. ຂອບເຂດການປົກຄອງ;
2. ຈຸດທີ່ຕັ້ງຂອງການປົກຄອງ;
3. ຮູບແບບສາມມິຕິ;
4. ຕາໜ່າງຄົມມະນາຄົມ;
5. ອຸທົກກະສາດ;

6. ພືກສາຊາດ;
7. ລະດັບຊັ້ນຄວາມສູງຂອງໜ້າດິນ;
8. ເຄື່ອງໝາຍທີ່ຕັ້ງຂອງການກໍ່ສ້າງ;
9. ແລວສາຍສົ່ງໄຟຟ້າ;
10. ຊັ້ນຂໍ້ມູນອື່ນທີ່ກ່ຽວຂ້ອງ.

## ໝວດທີ 2
## ການສ້າງແຜນທີ່ວຽກສະເພາະ

### ມາດຕາ 29 ການສ້າງແຜນທີ່ວຽກສະເພາະ

ການສ້າງແຜນທີ່ວຽກສະເພາະ ແມ່ນ ຂະບວນການສ້າງແຜນທີ່ຮັບໃຊ້ວຽກສະເພາະ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ເພື່ອຮັບໃຊ້ວຽກງານໃດໜຶ່ງຂອງຕົນ ໂດຍນໍາໃຊ້ຂໍ້ມູນເຄົ້າການສໍາຫຼວດວັດແທກພື້ນຖານແຫ່ງຊາດ ແລະ ປະຕິບັດຕາມມາດຕະຖານເຕັກນິກແຫ່ງຊາດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

ແຜນທີ່ວຽກສະເພາະ ມີ ດັ່ງນີ້:

1. ແຜນທີ່ເສັ້ນຊາຍແດນແຫ່ງຊາດ;
2. ແຜນທີ່ເສັ້ນເຂດແດນເຊື່ອມຕໍ່;
3. ແຜນທີ່ການປົກຄອງ;
4. ແຜນທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
5. ແຜນທີ່ດາດິນ;
6. ແຜນທີ່ປ່າໄມ້;
7. ແຜນທີ່ອຸທົກກະສາດ;
8. ແຜນທີ່ຕາໜ່າງຄົມມະນາຄົມ;
9. ແຜນທີ່ກິດຈະກໍາໂຄງການໃຕ້ດິນ;
10. ແຜນທີ່ຄວາມສ່ຽງໄພພິບັດ;
11. ແຜນທີ່ທໍລະນີສາດ ແລະ ແຮ່ທາດ;
12. ແຜນທີ່ວຽກສະເພາະອື່ນທີ່ກ່ຽວຂ້ອງ.

ພາຍຫຼັງສໍາເລັດການສ້າງແຜນທີ່ວຽກສະເພາະແລ້ວ ຂະແໜງການທີ່ກ່ຽວຂ້ອງ ຕ້ອງເປັນຜູ້ປະກາດໃຊ້ຢ່າງເປັນທາງການ.

ສໍາລັບ ລາຍລະອຽດຂອງການສ້າງແຜນທີ່ວຽກສະເພາະ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກຂອງຂະແໜງການທີ່ກ່ຽວຂ້ອງ.

### ມາດຕາ 30 ການຂຽນຊື່ພູມີປະເທດໃນການສ້າງແຜນທີ່ວຽກສະເພາະ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ສ້າງແຜນທີ່ຮັບໃຊ້ວຽກງານສະເພາະໃດໜຶ່ງຂອງຕົນ ຕ້ອງຂຽນຊື່ພູມີປະເທດ ຕາມຫຼັກການທີ່ໄດ້ກໍານົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້ ເພື່ອໃຫ້ສາມາດນໍາໃຊ້ຂໍ້ມູນຮ່ວມກັນໄດ້.

## ໝວດທີ 3
## ການພິມແຜນທີ່

**ມາດຕາ 31 ການພິມແຜນທີ່**

ການພິມແຜນທີ່ ແມ່ນ ຂະບວນການຕົກແຕ່ງ ແລະ ຜະລິດແຜນທີ່ດ້ວຍການພິມ,ຈັດພິມ ເປັນແຜ່ນ, ສື່ສິ່ງພິມເອເລັກໂຕຣນິກ ຫຼື ສື່ສິ່ງພິມອື່ນ ເພື່ອນຳໃຊ້, ຈຳໜ່າຍ ແລະ ບໍລິການ.

ການຈັດພິມແຜນທີ່ ຕ້ອງສະແດງໃຫ້ເຫັນ ຂອບເຂດອຳນາດອະທິປະໄຕ, ຊາຍແດນ ແລະ ຂອບເຂດການປົກຄອງ ຢ່າງຖືກຕ້ອງ ແລະ ຊັດເຈນ.

ການຈັດພິມແຜນທີ່ ມີ ດັ່ງນີ້:

1. ການພິມດ້ວຍປລອດເຕີ (Plotter);
2. ການພິມດ້ວຍອັອບແຊັດ (Offset).

**ມາດຕາ 32 ການຄຸ້ມຄອງການພິມແຜນທີ່**

ກະຊວງພາຍໃນ ເປັນຜູ້ພິມແຜນທີ່ພື້ນຖານ ແລະ ແຜນທີ່ວຽກສະເພາະ ທີ່ກ່ຽວຂ້ອງ ເພື່ອຮັບໃຊ້ການຄຸ້ມຄອງລັດ, ການພັດທະນາເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານອື່ນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງພິມແຜນທີ່ວຽກສະເພາະ ເພື່ອຮັບໃຊ້ວຽກງານຂອງຕົນ ຕ້ອງນຳເອົາແຜນທີ່ວຽກສະເພາະສະບັບຮ່າງຂອງຕົນ ທີ່ພົວພັນກັບຂໍ້ມູນທີ່ສຳຄັນ ແລະ ຈຳເປັນ ສະເໜີຜ່ານພະແນກພາຍໃນ ແຂວງ, ນະຄອນຫຼວງ ແລ້ວສົ່ງໃຫ້ກະຊວງພາຍໃນ ຕາມສາຍຕັ້ງຂອງຕົນ ເພື່ອກວດກາຢັ້ງຢືນຄວາມຖືກຕ້ອງພາຍໃນເວລາ ສິບຫ້າວັນ.

ການພິມແຜນທີ່ ຕ້ອງປະຕິບັດຕາມກົດໝາຍສະບັບນີ້, ກົດໝາຍວ່າດ້ວຍການພິມຈຳໜ່າຍ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ພາກທີ IV
## ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ
## ໝວດທີ 1
## ລະບົບຂໍ້ມູນ ຂ່າວສານ ພູມສາດ

**ມາດຕາ 33 ລະບົບຂໍ້ມູນ ຂ່າວສານ ພູມສາດ**

ລະບົບຂໍ້ມູນ ຂ່າວສານ ພູມສາດ ແມ່ນ ຂໍ້ມູນ, ສະຖິຕິ ກ່ຽວກັບພື້ນທີ່ ທີ່ເຊື່ອມໂຍງກັບຂໍ້ມູນຄຸນລັກສະນະຂອງຂໍ້ມູນ ຂ່າວສານ ພູມສາດ ໂດຍຜ່ານຂະບວນການປັບປຸງ, ວິເຄາະ ແລະ ເກັບຮັກສາ ດ້ວຍລະບົບເອເລັກໂຕຣນິກ ຊຶ່ງປະກອບດ້ວຍ:

1. ຂໍ້ມູນເວັກເຕີ (Vector) ແມ່ນ ຂໍ້ມູນພື້ນທີ່ໃນລະບົບຂໍ້ມູນ ຂ່າວສານ ພູມສາດທີ່ຖືກກຳນົດດ້ວຍຄ່າພິກັດ ຊຶ່ງສະແດງອອກໃນ ສາມຮູບແບບ ດັ່ງນີ້:

ກ. ຮູບແບບຈຸດ ເປັນຕົ້ນ ຈຸດທີ່ຕັ້ງບ້ານ, ໂຮງຮຽນ, ໂຮງໝໍ, ຈຸດຄວາມສູງ;

ຂ. ຮູບແບບເສັ້ນ ເປັນຕົ້ນ ເສັ້ນທາງຄົມມະນາຄົມ, ເສັ້ນແມ່ນ້ຳ, ເສັ້ນລະດັບຄວາມສູງ;

ຄ. ຮູບແບບເນື້ອທີ່ ເປັນຕົ້ນ ຂອບເຂດປ່າໄມ້, ຂອບເຂດແດນຂອງ ບ້ານ, ເມືອງ, ເທດສະບານ, ນະຄອນ, ແຂວງ, ນະຄອນຫຼວງ, ປະເທດ.

2. ຂໍ້ມູນຣາສເຕີ (Raster) ແມ່ນ ຂໍ້ມູນພື້ນທີ່ໃນລະບົບຂໍ້ມູນ ຂ່າວສານ ພູມສາດ ເປັນຕົ້ນ ຂໍ້ມູນພາບຖ່າຍທາງອາກາດ ແລະ ພາບຖ່າຍດາວທຽມ. ຂໍ້ມູນຣາສເຕີ (Raster) ສະແດງອອກ ໃນຮູບແບບສີ່ຫຼ່ຽມຈະຕຸລັດແຕ່ລະຮູບສີ່ຫຼ່ຽມ ຖືກກຳກັບດ້ວຍຕົວເລກທີ່ບົ່ງບອກເຖິງຄວາມລະອຽດຂອງຂໍ້ມູນຈຸດພາບ, ມີຫົວໜ່ວຍເປັນພິກເຊວ.

## ມາດຕາ 34 ປະເພດຂໍ້ມູນ ຂ່າວສານ ພູມສາດ

ຂໍ້ມູນ ຂ່າວສານ ພູມສາດ ມີ ສອງປະເພດ ດັ່ງນີ້:

1. ຂໍ້ມູນ ຂ່າວສານ ພູມສາດ, ຜະລິດຕະພັນສຳຫຼວດວັດແທກ ແລະ ແຜນທີ່ພື້ນຖານ;
2. ຂໍ້ມູນ ຂ່າວສານ ພູມສາດ, ຜະລິດຕະພັນສຳຫຼວດວັດແທກ ແລະ ແຜນທີ່ວຽກສະເພາະ.

## ມາດຕາ 35 ຂໍ້ມູນ ຂ່າວສານ ພູມສາດ, ຜະລິດຕະພັນສຳຫຼວດວັດແທກ ແລະ ແຜນທີ່ພື້ນຖານ

ຂໍ້ມູນ ຂ່າວສານ ພູມສາດ, ຜະລິດຕະພັນສຳຫຼວດວັດແທກ ແລະ ແຜນທີ່ພື້ນຖານ ມີ ດັ່ງນີ້:

1. ສຳນວນຂອງຂໍ້ມູນ ການສຳຫຼວດວັດແທກ ແລະ ແຜນທີ່;
2. ຂໍ້ມູນກ່ຽວກັບຕາໜ່າງເຄົ້າການສຳຫຼວດວັດແທກແຫ່ງຊາດ;
3. ຂໍ້ມູນພາບຖ່າຍ;
4. ຂໍ້ມູນແຜນທີ່ພູມສັນຖານ;
5. ຂໍ້ມູນຜະລິດຕະພັນການສຳຫຼວດວັດແທກ ແລະ ແຜນທີ່ເສັ້ນຊາຍແດນແຫ່ງຊາດ;
6. ຂໍ້ມູນຜະລິດຕະພັນການສຳຫຼວດວັດແທກ ແລະ ແຜນທີ່ການປົກຄອງແຕ່ລະຂັ້ນ;
7. ຂໍ້ມູນຊື່ພູມີປະເທດ;
8. ຜົນໄດ້ຮັບຈາກການຄົ້ນຄວ້າວິທະຍາສາດ ແລະ ການພັດທະນາເຕັກໂນໂລຊີ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່;
9. ນິຕິກຳ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ລວມທັງມາດຕະຖານເຕັກນິກ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່.

## ມາດຕາ 36 ຂໍ້ມູນ ຂ່າວສານ ພູມສາດ, ຜະລິດຕະພັນຂອງການສຳຫຼວດວັດແທກ ແລະ ແຜນທີ່ວຽກສະເພາະ

ຂໍ້ມູນ ຂ່າວສານ ພູມສາດ, ຜະລິດຕະພັນຂອງການສຳຫຼວດວັດແທກ ແລະ ແຜນທີ່ວຽກສະເພາະ ມີ ດັ່ງນີ້:

1. ແຜນທີ່ເສັ້ນຊາຍແດນແຫ່ງຊາດ;
2. ແຜນທີ່ເສັ້ນເຂດແດນເຊື່ອມຕໍ່;
3. ແຜນທີ່ການປົກຄອງ;
4. ແຜນທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
5. ແຜນທີ່ຕາດິນ;
6. ແຜນທີ່ປ່າໄມ້;
7. ແຜນທີ່ອຸທົກກະສາດ;
8. ແຜນທີ່ຕາໜ່າງຄົມມະນາຄົມ;
9. ແຜນທີ່ກິດຈະກຳໂຄງການໃຕ້ດິນ;

10. ແຜນທີ່ຄວາມສ່ຽງໄພພິບັດ;
11. ແຜນທີ່ທໍລະນີສາດ ແລະ ແຮ່ທາດ;
12. ແຜນທີ່ວຽກສະເພາະອື່ນທີ່ກ່ຽວຂ້ອງ.

**ມາດຕາ 37 ການສົ່ງຂໍ້ມູນ ຂ່າວສານ ພູມສາດ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ສ້າງ, ດັດແກ້, ຂໍ້ມູນ ຂ່າວສານ ພູມສາດ, ຜະລິດຕະພັນສຳຫຼວດວັດແທກ ແລະ ແຜນທີ່ ຕ້ອງສົ່ງຂໍ້ມູນດັ່ງກ່າວ ທີ່ຈຳເປັນ ເປັນຕົ້ນ ຂໍ້ມູນເສັ້ນເຂດແດນເຊື່ອມຕໍ່, ຂໍ້ມູນການສຳຫຼວດວັດແທກຂອງຂະແໜງການ, ຈຸດທີ່ຕັ້ງຂອງບ້ານ ໃຫ້ພະແນກພາຍໃນ ແຂວງ, ນະຄອນຫຼວງ ແລ້ວສົ່ງໃຫ້ກະຊວງພາຍໃນ ຕາມສາຍຕັ້ງຂອງຕົນ ເພື່ອແລກປ່ຽນ ແລະ ເອົາຂໍ້ມູນເຂົ້າໃນລະບົບຂໍ້ມູນ ຂ່າວສານ ພູມສາດ ແລະ ສາມາດເຊື່ອມໂຍງກັບຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ຕາມການອະນຸຍາດຂອງກະຊວງພາຍໃນ.

## ໝວດທີ 2
## ຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ

**ມາດຕາ 38 ຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ**

ຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ແມ່ນ ບ່ອນເກັບກຳ, ສັງລວມ, ເກັບຮັກສາ ແລະ ສະໜອງຂໍ້ມູນ ຂ່າວສານ ພູມສາດ ໃນຮູບແບບພິມ ແລະ ຮູບແບບເອເລັກໂຕຣນິກໄວ້ບ່ອນດຽວກັນ ແລະ ສາມາດນຳໃຊ້ ຫຼື ເອີ້ນໃຊ້ຂໍ້ມູນທຸກຄັ້ງທີ່ຕ້ອງການ.

ຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ປະກອບດ້ວຍ ຖານຂໍ້ມູນແຜນທີ່ພື້ນຖານ ແລະ ຖານຂໍ້ມູນແຜນທີ່ວຽກສະເພາະ.

**ມາດຕາ 39 ຖານຂໍ້ມູນແຜນທີ່ພື້ນຖານ**

ຖານຂໍ້ມູນແຜນທີ່ພື້ນຖານ ແມ່ນ ບ່ອນເກັບກຳ, ສັງລວມ, ເກັບຮັກສາ ແລະ ສະໜອງຂໍ້ມູນ ຂ່າວສານ ພູມສາດ ກ່ຽວກັບ ຂໍ້ມູນພື້ນຖານສຳລັບສ້າງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ.

ຖານຂໍ້ມູນແຜນທີ່ພື້ນຖານ ມີ ດັ່ງນີ້:

1. ຂໍ້ມູນຕາໜ່າງການສຳຫຼວດວັດແທກພື້ນຖານແຫ່ງຊາດ;
2. ຂໍ້ມູນແຜນທີ່ພູມສັນຖານ;
3. ຂໍ້ມູນພາບຖ່າຍທາງອາກາດ, ພາກພື້ນດິນ ແລະ ພື້ນນ້ຳ;
4. ຂໍ້ມູນແຜນທີ່ເສັ້ນຊາຍແດນແຫ່ງຊາດ;
5. ຂໍ້ມູນແຜນທີ່ການປົກຄອງ;
6. ຂໍ້ມູນຊື່ພູມີປະເທດ.

**ມາດຕາ 40 ຖານຂໍ້ມູນແຜນທີ່ວຽກສະເພາະ**

ຖານຂໍ້ມູນແຜນທີ່ວຽກສະເພາະ ແມ່ນ ບ່ອນເກັບກຳ, ສັງລວມ, ເກັບຮັກສາ ແລະ ສະໜອງຂໍ້ມູນ ຂ່າວສານ ພູມສາດ ກ່ຽວກັບ ຂໍ້ມູນວຽກສະເພາະ ທີ່ສາມາດໃຊ້ຮ່ວມກັນ ສຳລັບສ້າງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ.

ຖານຂໍ້ມູນແຜນທີ່ວຽກສະເພາະ ມີ ດັ່ງນີ້:

1. ຂໍ້ມູນການສໍາຫຼວດວັດແທກ ແລະ ສ້າງແຜນທີ່ເສັ້ນຊາຍແດນແຫ່ງຊາດ;

2. ຂໍ້ມູນການສໍາຫຼວດວັດແທກ ແລະ ສ້າງແຜນທີ່ເສັ້ນເຂດແດນເຊື່ອມຕໍ່;

3. ຂໍ້ມູນການສໍາຫຼວດວັດແທກ ແລະ ສ້າງແຜນທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

4. ຂໍ້ມູນການສໍາຫຼວດວັດແທກ ແລະ ສ້າງແຜນທີ່ຕາດິນ;

5. ຂໍ້ມູນການສໍາຫຼວດວັດແທກ ແລະ ສ້າງແຜນທີ່ການປົກຄອງ;

6. ຂໍ້ມູນການສໍາຫຼວດວັດແທກ ແລະ ສ້າງແຜນທີ່ຕາໜ່າງຄົມມະນາຄົມ;

7. ຂໍ້ມູນການສໍາຫຼວດວັດແທກ ແລະ ສ້າງແຜນທີ່ກິດຈະກໍາໂຄງການໃຕ້ດິນ;

8. ຂໍ້ມູນການສໍາຫຼວດວັດແທກ ແລະ ສ້າງແຜນທີ່ຄວາມສ່ຽງໄພພິບັດ;

9. ຂໍ້ມູນແຜນທີ່ ສໍາລັບແຜນຍຸດທະສາດຂອງຂະແໜງການ, ແຂວງ, ນະຄອນຫຼວງ, ແຜນພັດທະນາເຂດເສດຖະກິດພິເສດ;

10. ຂໍ້ມູນການສໍາຫຼວດວັດແທກ ແລະ ສ້າງແຜນທີ່ກະສິກໍາ ແລະ ປ່າໄມ້;

11. ຂໍ້ມູນການສໍາຫຼວດວັດແທກ ແລະ ສ້າງແຜນທີ່ທໍລະນີສາດ ແລະ ແຮ່ທາດ;

12. ຂໍ້ມູນການສໍາຫຼວດວັດແທກ ແລະ ສ້າງແຜນທີ່ວຽກສະເພາະອື່ນທີ່ກ່ຽວຂ້ອງ.

## ມາດຕາ 41 ການສ້າງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ

ກະຊວງພາຍໃນ ເປັນເຈົ້າການປະສານສົມທົບ ກັບກະຊວງ, ອົງການຂອງລັດ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ສ້າງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ດັ່ງນີ້:

1. ສ້າງແຜນຍຸດທະສາດການພັດທະນາ, ແຜນການຈັດຕັ້ງປະຕິບັດໂຄງສ້າງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ເພື່ອສະເໜີລັດຖະບານພິຈາລະນາ;

2. ສ້າງ ກົນໄກ, ນະໂຍບາຍ ແລະ ຊັບພະຍາກອນ ເພື່ອຈັດຕັ້ງປະຕິບັດແຜນຍຸດທະສາດພັດທະນາ, ແຜນການຈັດຕັ້ງປະຕິບັດໂຄງສ້າງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ;

3. ຄັດເລືອກ ແລະ ນໍາໃຊ້ເຕັກໂນໂລຊີ, ສ້າງມາດຕະຖານ ແລະ ຂໍ້ກໍານົດດ້ານເຕັກນິກ ກ່ຽວກັບການສ້າງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ;

4. ປະມວນ ແລະ ເຊື່ອມໂຍງຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ, ສ້າງ ແລະ ກໍານົດ ປະຕູເຂົ້າສູ່ຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ລວມທັງການນໍາໃຊ້, ການໃຫ້ບໍລິການ, ການແລກປ່ຽນ ແລະ ການພັດທະນາ ຂໍ້ມູນ ຂ່າວສານ ດັ່ງກ່າວ.

## ມາດຕາ 42 ການເຂົ້າເຖິງຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ

ກະຊວງພາຍໃນ ອະນຸຍາດໃຫ້ເຂົ້າເຖິງຂໍ້ມູນ ຂ່າວສານ ພູມສາດ, ໃຫ້ການບໍລິການ ແລະ ສະໜອງຂໍ້ມູນ ຂ່າວສານ ທີ່ກ່ຽວຂ້ອງທາງເວບໄຊ ຫຼື ຊ່ອງທາງອື່ນ ທີ່ກໍານົດໃຫ້ ເພື່ອຮັບປະກັນໃຫ້ແກ່ຜູ້ຊົມໃຊ້ສາມາດເຂົ້າເຖິງໄດ້ງ່າຍ, ສະດວກ ແລະ ວ່ອງໄວ.

ສໍາລັບຂໍ້ມູນທີ່ເປັນຄວາມລັບຂອງຊາດ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຈະບໍ່ອະນຸຍາດໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາກເອກະຊົນ ພາຍໃນ ແລະ ຕ່າງປະເທດ ເຂົ້າເຖິງ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກກະຊວງພາຍໃນ ແລະ ກະຊວງອື່ນທີ່ກ່ຽວຂ້ອງ.

**ມາດຕາ 43 ຫຼັກການກ່ຽວກັບການສ້າງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ**

ການສ້າງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງຂໍ້ມູນ ຂ່າວສານ ພູມສາດ ທີ່ເກັບກຳຈາກ ກະຊວງ, ອົງການຂອງລັດ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ, ສອດຄ່ອງກັບມາດຕະຖານເຕັກນິກທີ່ປະກາດໃຊ້ໃນແຕ່ລະໄລຍະ;
2. ຮັບປະກັນການປັບປຸງຢ່າງເປັນປົກກະຕິ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການຄຸ້ມຄອງລັດ, ການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
3. ຮັບປະກັນການຄຸ້ມຄອງໄພພິບັດ, ການກູ້ຊີບ, ການກູ້ໄພ ແລະ ການຮັບມືກັບການປ່ຽນແປງຂອງດິນຟ້າອາກາດ;
4. ອຳນວຍຄວາມສະດວກໃຫ້ແກ່ການບໍລິການສາທາລະນະ ແລະ ສາມາດເຊື່ອມໂຍງກັບໂຄງສ້າງຂໍ້ມູນ ຂ່າວສານ ພູມສາດ ຂອງບັນດາປະເທດໃນອະນຸພາກພື້ນ, ພາກພື້ນ ແລະ ສາກົນ.

## ໝວດທີ 3
## ການບໍລິການ ແລະ ການນຳໃຊ້ ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ

**ມາດຕາ 44 ການບໍລິການຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ**

ການບໍລິການຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ມີ ດັ່ງນີ້:

1. ການແລກປ່ຽນ, ການປັບປຸງ, ການວິເຄາະ, ການປະມວນ, ການຄົ້ນຫາ ແລະ ການຖອດຂໍ້ມູນ;
2. ການບໍລິການເຂົ້າເຖິງຖານຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ.

**ມາດຕາ 45 ການນຳໃຊ້ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ**

ກະຊວງ, ອົງການຂອງລັດ ແລະ ອົງການປົກຄອງທ້ອງຖິ່ນ ທີ່ນຳໃຊ້ງົບປະມານຂອງລັດ ເຂົ້າໃນການສ້າງ ຫຼື ປັບປຸງນະໂຍບາຍ, ແຜນຍຸດທະສາດ, ແຜນການ, ແຜນງານ, ໂຄງການ ຕ້ອງນຳໃຊ້ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ສາມາດນຳໃຊ້ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ເຂົ້າໃນການຜະລິດ, ການດຳເນີນທຸລະກິດ ແລະ ການເຄື່ອນໄຫວວຽກງານຂອງຕົນ.

ການນຳໃຊ້ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 46 ສຳນວນຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ**

ສຳນວນຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ປະກອບດ້ວຍ:

1. ຂອບເຂດ, ການຈັດຕັ້ງທີ່ຮັບຜິດຊອບ, ຜູ້ສ້າງ, ວັນທີ, ເດືອນ, ປີສ້າງ, ດັດແກ້ ແລະ ເກັບກຳຂໍ້ມູນ;
2. ຄວາມສອດຄ່ອງກັບມາດຕະຖານ ແລະ ລະບຽບການທາງດ້ານເຕັກນິກ;
3. ຄຸນນະພາບ ແລະ ຄຸນຄ່າຂໍ້ມູນທາງດ້ານກົດໝາຍ;
4. ຂໍ້ມູນອື່ນທີ່ກ່ຽວຂ້ອງ.

# ພາກທີ V

# ການຄຸ້ມຄອງ ເຄື່ອງມື, ຂໍ້ມູນ ສຳຫຼວດວັດແທກ ແລະ ສ້າງແຜນທີ່ ແລະ ໂຄງລ່າງພື້ນຖານສຳຫຼວດວັດແທກ

## ໝວດທີ 1

## ການຄຸ້ມຄອງເຄື່ອງມື ສຳຫຼວດວັດແທກ ແລະ ສ້າງແຜນທີ່

**ມາດຕາ 47 ການຂຶ້ນທະບຽນເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ຄອບຄອງ ແລະ ນຳໃຊ້ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢູ່ ສປປ ລາວ ຕ້ອງນຳເອົາເຄື່ອງມືດັ່ງກ່າວ ມາກວດກາເຕັກນິກ ແລະ ຂຶ້ນທະບຽນ ນຳກະຊວງພາຍໃນ ຕາມລະບຽບການ ເປັນຕົ້ນ ເຄື່ອງວັດແທກຮັບສັນຍານດາວທຽມ ດ້ວຍລະບົບດາວທຽມນຳພາທາງໂລກ (GNSS), ເຄື່ອງບັນທຶກຖ່າຍພາບພື້ນດິນ (Laser scanner), ອຸປະກອນຖ່າຍພາບທາງອາກາດ, ເຄື່ອງສຳຫຼວດວັດແທກພື້ນນ້ຳ (Echo Sounder), ເຄື່ອງວັດແທກລະດັບສູງ (Digital Level), ເຄື່ອງວັດແທກປະມວນຜົນ (Total Station), ເຄື່ອງວັດແທກແຮງດຶງດູດຂອງໜ່ວຍໂລກ, ເຄື່ອງກວດກາປັບແກ້ເຄື່ອງວັດແທກປະມວນຜົນ (Calibration).

**ມາດຕາ 48 ການກວດກາເຕັກນິກ, ການປັບແກ້ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່**

ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງໄດ້ຮັບການກວດກາທາງດ້ານເຕັກນິກ ແລະ ປັບແກ້ ຕາມມາດຕະຖານເຕັກນິກການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ກະຊວງພາຍໃນ ວາງອອກແຕ່ລະໄລຍະ ແລະ ຄູ່ມືເຕັກນິກຂອງຜູ້ຜະລິດ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນການກວດກາເຕັກນິກ, ປັບແກ້, ທົດລອງເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງໄດ້ຂໍອະນຸຍາດນຳກະຊວງພາຍໃນ ແລະ ຕ້ອງລາຍງານຜົນຂອງການກວດກາເຕັກນິກ ຕໍ່ກະຊວງພາຍໃນ.

ກະຊວງພາຍໃນ ຫຼື ຜູ້ດຳເນີນການກວດກາເຕັກນິກ ເປັນຜູ້ອອກໃບຢັ້ງຢືນຄວາມຖືກຕ້ອງທາງດ້ານເຕັກນິກ ຂອງເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ຄົບໄດ້ກວດກາຜ່ານ, ປັບແກ້ແລ້ວ.

**ມາດຕາ 49 ການບໍລິການ, ການຈຳໜ່າຍ ແລະ ການນຳໃຊ້ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່**

ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ນຳມາໃຫ້ບໍລິການ, ຈຳໜ່າຍ ແລະ ນຳໃຊ້ສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງມີຄູ່ມືເຕັກນິກຂອງຜູ້ຜະລິດ, ໃບຢັ້ງຢືນຄວາມຖືກຕ້ອງດ້ານເຕັກນິກ ທີ່ກະຊວງພາຍໃນ ຫຼື ຜູ້ດຳເນີນການກວດກາເຕັກນິກອອກໃຫ້.

**ມາດຕາ 50 ການນຳເຂົ້າ-ສົ່ງອອກ ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າ-ສົ່ງອອກ ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງຂໍອະນຸຍາດນຳກະຊວງອຸດສາຫະກຳ ແລະ ການຄ້າ ໂດຍໄດ້ຮັບການເຫັນດີຈາກກະຊວງພາຍໃນ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການນຳເຂົ້າ-ສົ່ງອອກ.

## ໝວດທີ 2
## ການຄຸ້ມຄອງຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່

### ມາດຕາ 51 ການກວດກາ ແລະ ຢັ້ງຢືນ ຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່

ຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຈາກການເຄື່ອນໄຫວສຳຫຼວດວັດແທກຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ເພື່ອສ້າງແຜນທີ່ ຕ້ອງຜ່ານການກວດກາ ແລະ ຢັ້ງຢືນຄຸນນະພາບ ແລະ ຄວາມຖືກຕ້ອງ ຈາກກະຊວງພາຍໃນ ຕາມມາດຕະຖານເຕັກນິກຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ວາງອອກໃນແຕ່ລະໄລຍະ.

### ມາດຕາ 52 ມາດຕະຖານເຕັກນິກຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່

ກະຊວງພາຍໃນ ເປັນຜູ້ສ້າງມາດຕະຖານເຕັກນິກຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍສອດຄ່ອງກັບການຂະຫຍາຍຕົວຂອງວິທະຍາສາດ-ເຕັກໂນໂລຊີ ໃນແຕ່ລະໄລຍະ, ສອດຄ່ອງກັບລະບົບຂໍ້ມູນເຄົ້າການວັດແທກແຫ່ງຊາດ, ມາດຕະຖານເຕັກນິກການສຳຫຼວດວັດແທກແຕ່ລະຂັ້ນ ແລະ ມາດຕະຖານເຕັກນິກການສ້າງແຜນທີ່ແຕ່ລະມາດຕາສ່ວນ.

### ມາດຕາ 53 ການກວດກາຄຸນນະພາບຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່

ການກວດກາຄຸນນະພາບຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ປະຕິບັດ ດັ່ງນີ້:

1. ກວດກາຕາມຂໍ້ມູນທີ່ໄດ້ສຳຫຼວດວັດແທກ, ພາບຖ່າຍ, ແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດ ໂດຍອີງຕາມມາດຕະຖານເຕັກນິກ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່, ຂໍ້ມູນ ຂ່າວສານ ພູມສາດທີ່ປະກາດໃຊ້ໃນແຕ່ລະໄລຍະ;
2. ກວດກາຂໍ້ມູນ ແລະ ຜະລິດຕະພັນ ການສຳຫຼວດວັດແທກ ແລະ ສ້າງແຜນທີ່ ເປັນຕົ້ນ ພາບຖ່າຍ, ແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດ ທີ່ຜະລິດຢູ່ພາຍໃນປະເທດ ຫຼື ນຳເຂົ້າ ເພື່ອຈຳໜ່າຍ ຊຶ່ງຕ້ອງຮັບປະກັນທາງດ້ານຄຸນນະພາບ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວສຳຫຼວດວັດແທກ ແລະ ສ້າງແຜນທີ່ຕ້ອງມີຄວາມຮັບຜິດຊອບໃນການກວດກາຄຸນນະພາບຂໍ້ມູນຂອງວຽກງານດັ່ງກ່າວ ຄື:

1. ຮັບຜິດຊອບຕໍ່ການກວດກາຄຸນນະພາບຂໍ້ມູນ ທີ່ໄດ້ສຳຫຼວດວັດແທກ, ພາບຖ່າຍ, ແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດທີ່ຕົນສ້າງຂຶ້ນ;
2. ຮັບຜິດຊອບຕໍ່ການຕິດຕາມ ກວດກາຄຸນນະພາບ ແລະ ຮັບຮອງຜະລິດຕະພັນທີ່ໄດ້ຈາກການສຳຫຼວດວັດແທກ, ພາບຖ່າຍ, ແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດ ທີ່ຕົນສ້າງຂຶ້ນ.

ກະຊວງ, ອົງການຂອງລັດທີ່ກ່ຽວຂ້ອງ ເປັນຜູ້ປະກາດໃຊ້ມາດຕະຖານເຕັກນິກ ກ່ຽວກັບການກວດກາຄຸນນະພາບຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່, ພາບຖ່າຍ, ແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ.

ກະຊວງພາຍໃນ ເປັນຜູ້ກຳນົດລະບຽບການ, ມາດຕະຖານເຕັກນິກ ກ່ຽວກັບການກວດກາ ແລະ ຢັ້ງຢືນຄຸນນະພາບຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່, ຜະລິດຕະພັນການສຳຫຼວດວັດແທກ, ພາບຖ່າຍ, ແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດ.

ກະຊວງພາຍໃນ ເປັນຜູ້ກວດກາ ແລະ ຮັບຮອງ ຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່, ແຜນທີ່ວຽກສະເພາະ ທີ່ມີການພົວພັນກັບເສັ້ນຊາຍແດນລະຫວ່າງຊາດ ແລະ ເຂດແດນເຊື່ອມຕໍ່.

**ມາດຕາ 54 ການກວດກາ ແລະ ດັດແກ້ຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່**

ກະຊວງພາຍໃນ ເປັນຜູ້ກວດກາຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຈາກການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕາມການອະນຸຍາດຂອງຕົນ ແລະ ລົງກວດກາຢູ່ພາກສະໜາມ ເພື່ອກວດກາການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຮັບອະນຸຍາດ.

ໃນກໍລະນີ ມີຂໍ້ຜິດພາດ ກ່ຽວກັບຂໍ້ມູນສຳຫຼວດວັດແທກ ແລະ ສ້າງແຜນທີ່, ກະຊວງພາຍໃນ ຕ້ອງໃຫ້ຄຳແນະນຳເປັນລາຍລັກອັກສອນ ເພື່ອໃຫ້ດັດແກ້ຂໍ້ຜິດພາດດັ່ງກ່າວ. ພາຍຫຼັງໄດ້ໃຫ້ຄຳແນະນຳແລ້ວ ຫາກເຫັນວ່າ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ບໍ່ດັດແກ້ ຕາມກຳນົດເວລາທີ່ໄດ້ແນະນຳ ໃຫ້ກະຊວງພາຍໃນ ດັດແກ້ຂໍ້ຜິດພາດດັ່ງກ່າວ ແລະ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງນັ້ນ ຮັບຜິດຊອບຄ່າໃຊ້ຈ່າຍທັງໝົດ.

**ມາດຕາ 55 ການນຳເຂົ້າ, ສົ່ງອອກ ຂໍ້ມູນ, ຜະລິດຕະພັນສຳຫຼວດວັດແທກ ແລະ ສ້າງແຜນທີ່**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳເຂົ້າ-ສົ່ງອອກ ຂໍ້ມູນ, ຜະລິດຕະພັນ ສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງຂໍອະນຸຍາດນຳກະຊວງພາຍໃນ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວກັບການນຳເຂົ້າ-ສົ່ງອອກ.

**ມາດຕາ 56 ລິຂະສິດ ກ່ຽວກັບຂໍ້ມູນ ແລະ ຜະລິດຕະພັນສຳຫຼວດວັດແທກ ແລະ ສ້າງແຜນທີ່**

ຂໍ້ມູນ ແລະ ຜະລິດຕະພັນສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໃຊ້ງົບປະມານຂອງລັດ ຫຼື ໄດ້ຮັບການຊ່ວຍເຫຼືອລ້າ ຈາກຕ່າງປະເທດ, ພາກພື້ນ ແລະ ສາກົນ ຕ້ອງເປັນລິຂະສິດຂອງລັດ.

ລິຂະສິດ ກ່ຽວກັບຂໍ້ມູນ ແລະ ຜະລິດຕະພັນການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 3
## ການຄຸ້ມຄອງໂຄງລ່າງພື້ນຖານສຳຫຼວດວັດແທກ

**ມາດຕາ 57 ໂຄງລ່າງພື້ນຖານສຳຫຼວດວັດແທກ**

ໂຄງລ່າງພື້ນຖານສຳຫຼວດວັດແທກ ມີ ດັ່ງນີ້:

1. ໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ;
2. ໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະ.

**ມາດຕາ 58 ໂຄງລ່າງພື້ນຖານລໍາຫຼອດວັດແທກແຫ່ງຊາດ**

ໂຄງລ່າງພື້ນຖານລໍາຫຼອດວັດແທກແຫ່ງຊາດ ແມ່ນ ໂຄງລ່າງພື້ນຖານລໍາຫຼອດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງແຫ່ງຊາດ ທີ່ສ້າງຂຶ້ນຢູ່ຈຸດໃດໜຶ່ງ ເທິງພື້ນຜິວໂລກທີ່ແນ່ນອນ ເພື່ອກໍານົດຕາໜ່າງລໍາຫຼອດວັດແທກພື້ນຖານແຫ່ງຊາດ ຢ່າງເປັນລະບົບ ແລະ ເອກະພາບ ໃນຂອບເຂດທົ່ວປະເທດ.

**ມາດຕາ 59 ໂຄງລ່າງພື້ນຖານລໍາຫຼອດວັດແທກວຽກສະເພາະ**

ໂຄງລ່າງພື້ນຖານລໍາຫຼອດວັດແທກວຽກສະເພາະ ແມ່ນ ໂຄງລ່າງພື້ນຖານລໍາຫຼອດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ ວຽກສະເພາະ ທີ່ສ້າງຂຶ້ນຢູ່ຈຸດໃດໜຶ່ງ ເທິງພື້ນຜິວໂລກທີ່ແນ່ນອນ ເພື່ອນໍາໃຊ້ເຂົ້າໃນວຽກງານສະເພາະໃດໜຶ່ງ ຊຶ່ງຕ້ອງນໍາໃຊ້ຂໍ້ມູນເຄົ້າການລໍາຫຼອດວັດແທກພື້ນຖານແຫ່ງຊາດ ແລະ ປະຕິບັດ ຕາມມາດຕະຖານເຕັກນິກແຫ່ງຊາດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 60 ການຄຸ້ມຄອງໂຄງລ່າງພື້ນຖານລໍາຫຼອດວັດແທກ**

ການຄຸ້ມຄອງໂຄງລ່າງພື້ນຖານລໍາຫຼອດວັດແທກ ມີ ດັ່ງນີ້:

1. ການສ້າງໂຄງລ່າງພື້ນຖານການລໍາຫຼອດວັດແທກ;
2. ການນໍາໃຊ້ໂຄງລ່າງພື້ນຖານລໍາຫຼອດວັດແທກ;
3. ການປົກປັກຮັກສາໂຄງລ່າງພື້ນຖານລໍາຫຼອດວັດແທກ.

**ມາດຕາ 61 ການສ້າງໂຄງລ່າງພື້ນຖານລໍາຫຼອດວັດແທກ**

ລັດຖະບານ ເປັນຜູ້ກໍານົດການສ້າງໂຄງລ່າງພື້ນຖານລໍາຫຼອດວັດແທກແຫ່ງຊາດ ແລະ ການນໍາໃຊ້ທີ່ດິນສໍາລັບການສ້າງໂຄງລ່າງພື້ນຖານດັ່ງກ່າວ ຕາມການສະເໜີຂອງກະຊວງພາຍໃນ ເພື່ອນໍາສະເໜີຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ.

ກະຊວງພາຍໃນ ເປັນຜູ້ຮັບຜິດຊອບສ້າງໂຄງລ່າງພື້ນຖານລໍາຫຼອດວັດແທກແຫ່ງຊາດ ພາຍຫຼັງຄະນະປະຈໍາສະພາແຫ່ງຊາດ ພິຈາລະນາຮັບຮອງ.

ການສ້າງໂຄງລ່າງພື້ນຖານລໍາຫຼອດວັດແທກວຽກສະເພາະ ຕ້ອງປະສານສົມທົບ ແລະ ເປັນເອກະພາບກັບກະຊວງພາຍໃນ ແລະ ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນມາດຕາ 59 ຂອງກົດໝາຍສະບັບນີ້.

**ມາດຕາ 62 ການນໍາໃຊ້ໂຄງລ່າງພື້ນຖານລໍາຫຼອດວັດແທກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນໍາໃຊ້ໂຄງລ່າງພື້ນຖານລໍາຫຼອດວັດແທກແຫ່ງຊາດ ຕ້ອງໄດ້ຂໍອະນຸຍາດນໍາກະຊວງພາຍໃນ ແລະ ຕ້ອງລາຍງານພະແນກພາຍໃນ ແຂວງ, ນະຄອນຫຼວງ ຫຼື ຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ ບ່ອນໂຄງລ່າງພື້ນຖານຕັ້ງຢູ່ ກ່ອນນໍາໃຊ້ ພ້ອມທັງຮັບປະກັນບໍ່ໃຫ້ໂຄງລ່າງພື້ນຖານທີ່ດີນນໍາໃຊ້ບົ້ນເປ່ເພ ແລະ ເສຍຫາຍ ຕະຫຼອດໄລຍະເວລານໍາໃຊ້.

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະທີ່ຕົນສ້າງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍມີການປະສານສົມທົບກັບ ກະຊວງພາຍໃນ.

ຜູ້ມີສິດນຳໃຊ້ທີ່ດິນ ບ່ອນໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ແລະ ວຽກສະເພາະ ຕັ້ງຢູ່ ຕ້ອງອຳນວຍຄວາມສະດວກໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ນຳໃຊ້ໂຄງລ່າງພື້ນຖານດັ່ງກ່າວ.

### ມາດຕາ 63 ການປົກປັກຮັກສາໂຄງລ່າງພື້ນຖານສຳຫຼວດວັດແທກ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພັນທະ ປົກປັກຮັກສາໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ແລະ ວຽກສະເພາະ. ໃນກໍລະນີພົບເຫັນໂຄງລ່າງພື້ນຖານສຳຫຼວດວັດແທກ ດັ່ງກ່າວ ເປ່ເພ, ເສຍຫາຍ, ຖືກທຳລາຍ, ຍົກຍ້າຍ ຫຼື ມີຄວາມສ່ຽງທີ່ຈະພາໃຫ້ມີຄວາມເສຍຫາຍ ຕ້ອງແຈ້ງໃຫ້ອົງການປົກຄອງບ້ານ, ຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ, ພະແນກພາຍໃນ ແຂວງ, ນະຄອນຫຼວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຢ່າງທັນການ ຕາມແຕ່ລະກໍລະນີ.

ກະຊວງພາຍໃນ ມີ ຄວາມຮັບຜິດຊອບໃນການປົກປັກຮັກສາໂຄງລ່າງພື້ນຖານສຳຫຼວດວັດແທກແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້, ສ່ວນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງ ມີຄວາມຮັບຜິດຊອບໃນການປົກປັກຮັກສາ ໂຄງລ່າງພື້ນຖານສຳຫຼວດວັດແທກວຽກສະເພາະ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

ທີ່ດິນ ທີ່ເປັນບ່ອນຕັ້ງໂຄງລ່າງພື້ນຖານສຳຫຼວດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງແຫ່ງຊາດ ແລະ ວຽກສະເພາະ ແມ່ນ ທີ່ດິນທີ່ຕ້ອງໄດ້ຮັບການປົກປັກຮັກສາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທີ່ດິນ, ກົດໝາຍອື່ນ ແລະ ລະບຽບການ ທີ່ກ່ຽວຂ້ອງ.

ໃນກໍລະນີມີຄວາມຈຳເປັນ ຕ້ອງໄດ້ຍົກຍ້າຍໂຄງລ່າງພື້ນຖານສຳຫຼວດວັດແທກ ຫຼື ສະຖານີອ້າງອີງການສຳຫຼວດແບບຕໍ່ເນື່ອງແຫ່ງຊາດບົນພື້ນຖານຄວາມຮຽກຮ້ອງຕ້ອງການໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງໄດ້ຮັບການເຫັນດີຈາກກະຊວງພາຍໃນ ແລະ ຮັບຜິດຊອບໃຊ້ຈ່າຍໃນການກໍ່ສ້າງຄືນໃໝ່ທັງໝົດ, ສ່ວນການຍົກຍ້າຍໂຄງລ່າງພື້ນຖານສຳຫຼວດວັດແທກ ຫຼື ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງວຽກສະເພາະນັ້ນ ກໍຕ້ອງແຈ້ງກະຊວງພາຍໃນ.

ຂັ້ນຕອນການປົກປັກຮັກສາໂຄງລ່າງພື້ນຖານສຳຫຼວດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງແຫ່ງຊາດ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

# ພາກທີ VI
# ການປະກອບວິຊາຊີບ ແລະ ທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່

## ໝວດທີ 1
## ການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່

### ມາດຕາ 64 ການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່

ການປະກອບວິຊາຊີບ ການສຳຫຼວດວັດແທກ ແລະ ສ້າງແຜນທີ່ ແມ່ນ ການປະກອບອາຊີບຂອງນັກວິຊາການດ້ານການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງໄດ້ຮັບອະນຸຍາດຈາກກະຊວງພາຍໃນ.

ຜູ້ຈະໄດ້ຮັບອະນຸຍາດເປັນຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງມີເງື່ອນໄຂຄົບຖ້ວນ ດັ່ງນີ້:

1. ມີປະກາສະນີຍະບັດ ລະດັບວິຊາສະເພາະຂັ້ນສູງຂຶ້ນໄປທີ່ກ່ຽວຂ້ອງກັບວຽກງານການສຳຫຼວດວັດແທກ ແລະ ສ້າງແຜນທີ່;
2. ມີຄວາມຮູ້ທາງດ້ານກົດໝາຍ ແລະ ລະບຽບການ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່;
3. ມີຄວາມຮູ້, ຄວາມສາມາດ ແລະ ປະສົບການ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢ່າງໜ້ອຍ ສາມປີ ຂຶ້ນໄປ;
4. ຜ່ານການສອບເສັງ, ສຳພາດ ແລະ ຝຶກອົບຮົມ ຈາກກະຊວງພາຍໃນ;
5. ມີເງື່ອນໄຂມາດຕະຖານກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
6. ມີເງື່ອນໄຂອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

### ມາດຕາ 65 ເອກະສານປະກອບ ກ່ຽວກັບການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່

ເອກະສານປະກອບ ກ່ຽວກັບການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີດັ່ງນີ້:

1. ຄຳຮ້ອງ ຕາມການກຳນົດຂອງກະຊວງພາຍໃນ;
2. ສຳເນົາຖ່າຍບັດປະຈຳຕົວ;
3. ສຳເນົາຖ່າຍປະກາສະນີຍະບັດ;
4. ໃບຢັ້ງຢືນການເຮັດວຽກ ແລະ ປະສົບການກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
5. ໃບແຈ້ງໂທດ;
6. ໃບກວດ ຫຼື ໃບຢັ້ງຢືນ ສຸຂະພາບ;
7. ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 66 ການພິຈາລະນາ ກ່ຽວກັບການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ພາຍຫຼັງໄດ້ຮັບເອກະສານປະກອບ ກ່ຽວກັບການປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ແລ້ວ ກະຊວງພາຍໃນ ຕ້ອງຄົ້ນຄວ້າ ແລະ ພິຈາລະນາ ເອກະສານດັ່ງກ່າວ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບເອກະສານ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

ໃນກໍລະນີເອກະສານ ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ກະຊວງພາຍໃນ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍເປັນລາຍລັກອັກສອນ ເພື່ອປະກອບເອກະສານທີ່ກ່ຽວຂ້ອງຄືນໃໝ່ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບແຈ້ງການ ເປັນຕົ້ນໄປ.

ສຳລັບ ຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ເປັນຄົນຕ່າງປະເທດ ທີ່ມີຈຸດປະສົງປະກອບວິຊາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢູ່ ສປປ ລາວ ໃຫ້ຂໍອະນຸຍາດເຄື່ອນໄຫວນຳກະຊວງພາຍໃນ.

**ມາດຕາ 67 ການເຄື່ອນໄຫວຂອງຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຮັບໃບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ສາມາດເຄື່ອນໄຫວປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕາມຂອບເຂດວິຊາຊີບທີ່ຕົນໄດ້ຮັບອະນຸຍາດ ເທົ່ານັ້ນ.

ສຳລັບ ຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ເປັນຄົນຕ່າງປະເທດ ທີ່ງເຄື່ອນໄຫວສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢູ່ ສປປ ລາວ ຕ້ອງເຄື່ອນໄຫວພາຍໃຕ້ການຕິດຕາມກວດກາ ແລະ ຄຸ້ມຄອງ ຂອງກະຊວງພາຍໃນ.

**ມາດຕາ 68 ການລາຍງານການເຄື່ອນໄຫວສຳຫຼວດວັດແທກ ແລະ ສ້າງແຜນທີ່**

ຜູ້ປະກອບອາຊີບດ້ານການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຮັບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຕ້ອງສົ່ງບົດລາຍງານປະຈຳປີ ກ່ຽວກັບການເຄື່ອນໄຫວສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕໍ່ກະຊວງພາຍໃນ ຢ່າງຊ້າບໍ່ໃຫ້ກາຍ ເກົ້າສິບວັນ ນັບແຕ່ວັນທີ 1 ເດືອນມັງກອນ ຂອງປີຖັດໄປ.

ໃນກໍລະນີຈຳເປັນ ກະຊວງພາຍໃນ ສາມາດແຈ້ງໃຫ້ຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ໄດ້ຮັບອະນຸຍາດນັ້ນ ສົ່ງບົດລາຍງານແບບລະອຽດ ກ່ຽວກັບການເຄື່ອນໄຫວສຳຫຼວດວັດແທກ ແລະ ສ້າງແຜນທີ່ ສະເພາະໃດໜຶ່ງທີ່ຕົນກຳລັງເຄື່ອນໄຫວ ຫຼື ຕາມທີ່ໄດ້ລາຍງານໃນບົດລາຍງານປະຈຳປີ.

## ໝວດທີ 2
## ທຸລະກິດກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່

**ມາດຕາ 69 ປະເພດທຸລະກິດກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່**

ປະເພດທຸລະກິດກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີ ດັ່ງນີ້:

1. ການສຳຫຼວດວັດແທກຈຸດພິກັດຂັ້ນ 3, ຂັ້ນ 4, ຂັ້ນເຕັກນິກ;
2. ການສຳຫຼວດວັດແທກຈຸດລະດັບຂັ້ນ III, ຂັ້ນ IV, ຂັ້ນເຕັກນິກ;
3. ການສຳຫຼວດວັດແທກສ້າງແຜນທີ່ພື້ນຖານ ທີ່ມີເນື້ອທີ່ໜ້ອຍກວ່າ ຊາວກິໂລຕາແມັດ;
4. ການສຳຫຼວດວັດແທກ ເພື່ອອອກແບບຮັບໃຊ້ວຽກສະເພາະ;
5. ການຖ່າຍພາບທາງອາກາດ, ຖ່າຍພາບພື້ນດິນ ແລະ ພື້ນນ້ຳ ເພື່ອສ້າງແຜນທີ່;
6. ການດັດແກ້ງແຕ້ມແຜນທີ່ພື້ນຖານ ແລະ ແຜນທີ່ວຽກສະເພາະ;
7. ການບໍລິການຂໍ້ມູນ ຂ່າວສານ ພູມສາດ;

8. ການບໍລິການໃຫ້ຄໍາປຶກສາ ກ່ຽວກັບການສໍາຫຼວດວັດແທກ, ສ້າງແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດ;

9. ການພິມຈໍາໜ່າຍແຜນທີ່;

10. ການບໍລິການກວດກາເຕັກນິກ, ເຊົ່າ ຫຼື ຈໍາໜ່າຍ ເຄື່ອງມືສໍາຫຼວດວັດແທກ ແລະ ສ້າງແຜນທີ່.

**ມາດຕາ 70 ເງື່ອນໄຂຂອງການດໍາເນີນທຸລະກິດ ກ່ຽວກັບການສໍາຫຼວດວັດແທກ ແລະ ສ້າງແຜນທີ່**

ການດໍາເນີນທຸລະກິດ ກ່ຽວກັບການສໍາຫຼວດວັດແທກ ແລະ ສ້າງແຜນທີ່ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີໃບທະບຽນວິສາຫະກິດ;

2. ມີທຶນພຽງພໍ ແລະ ເໝາະສົມກັບປະເພດທຸລະກິດ ກ່ຽວກັບການສໍາຫຼວດວັດແທກ ແລະ ສ້າງແຜນທີ່;

3. ມີບົດວິພາກເສດຖະກິດ-ເຕັກນິກ, ແຜນດໍາເນີນທຸລະກິດ, ມີສະຖານທີ່, ສໍານັກງານ ຫຼື ສິ່ງປຸກສ້າງ, ເຄື່ອງມືສໍາຫຼວດວັດແທກ ແລະ ສ້າງແຜນທີ່, ພາຫະນະຮັບໃຊ້ ແລະ ສິ່ງອໍານວຍຄວາມສະດວກທີ່ເໝາະສົມ ແລະ ໄດ້ມາດຕະຖານ;

4. ມີນັກວິຊາການ, ຜູ້ຊ່ຽວຊານທີ່ມີຄວາມຮູ້ ແລະ ປະສົບການ ດ້ານການສໍາຫຼວດວັດແທກ ແລະ ສ້າງແຜນທີ່ ຕາມຈໍານວນທີ່ເໝາະສົມກັບຂະໜາດຂອງທຸລະກິດ;

5. ບໍ່ເຄີຍຖືກສານຕັດສິນລົງໂທດຍ້ອນການກະທໍາຜິດໂດຍເຈດຕະນາ.

ນອກຈາກນັ້ນ, ຍັງມີເງື່ອນໄຂສະເພາະ ຕາມແຕ່ລະປະເພດທຸລະກິດ ຊຶ່ງກະຊວງພາຍໃນ ເປັນຜູ້ກໍານົດ.

**ມາດຕາ 71 ເອກະສານປະກອບການຂໍອະນຸຍາດດໍາເນີນທຸລະກິດ ກ່ຽວກັບການສໍາຫຼວດວັດແທກ ແລະ ສ້າງແຜນທີ່**

ເອກະສານປະກອບການຂໍອະນຸຍາດດໍາເນີນທຸລະກິດ ກ່ຽວກັບການສໍາຫຼວດວັດແທກ ແລະ ສ້າງແຜນທີ່ ມີ ດັ່ງນີ້:

1. ຄໍາຮ້ອງຂໍອະນຸຍາດດໍາເນີນທຸລະກິດ;

2. ບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການດໍາເນີນທຸລະກິດ;

3. ໃບຢັ້ງຢືນຄວາມຖືກຕ້ອງດ້ານເຕັກນິກ ຂອງເຄື່ອງມືສໍາຫຼວດວັດແທກ ແລະ ສ້າງແຜນທີ່;

4. ເອກະສານອື່ນ ທີ່ກ່ຽວຂ້ອງ ຊຶ່ງເຫັນວ່າຈໍາເປັນ.

**ມາດຕາ 72 ການຍື່ນຄໍາຮ້ອງຂໍດໍາເນີນທຸລະກິດ ກ່ຽວກັບການສໍາຫຼວດວັດແທກ ແລະ ສ້າງແຜນທີ່**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດໍາເນີນທຸລະກິດ ກ່ຽວກັບການສໍາຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ຢູ່ໃນບັນຊີຄວບຄຸມ ໃຫ້ຍື່ນຄໍາຮ້ອງ ພ້ອມດ້ວຍເອກະສານປະກອບຕໍ່ຫ້ອງການບໍລິການການລົງທຶນປະຕູດຽວ ຂັ້ນສູນກາງ ຫຼື ຂັ້ນແຂວງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດໍາເນີນທຸລະກິດ ກ່ຽວກັບການສໍາຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ບໍ່ຢູ່ໃນບັນຊີຄວບຄຸມ ໃຫ້ຍື່ນຄໍາຮ້ອງພ້ອມດ້ວຍເອກະສານປະກອບ ຕໍ່ຂະແໜງການອຸດສາຫະກໍາ ແລະ ການຄ້າ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ຕ້ອງໄດ້ຂໍອະນຸຍາດທາງດ້ານວິຊາການຈາກກະຊວງພາຍໃນ.

ມາດຕາ 73 ການພິຈາລະນາອະນຸຍາດດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່

ກະຊວງພາຍໃນ ຕ້ອງພິຈາລະນາອະນຸຍາດທາງດ້ານວິຊາການ ຫຼື ອະນຸຍາດດຳເນີນທຸລະກິດ ຕາມກຳນົດເວລາ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍວິສາຫະກິດ.

ມາດຕາ 74 ການໂຈະການດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່

ການດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ການສະເໜີຂອງຜູ້ດຳເນີນທຸລະກິດ;

2. ການສັ່ງໂຈະຂອງອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ເພື່ອກວດກາ ດ້ວຍເຫດຜົນ ດັ່ງນີ້:

2.1 ດຳເນີນທຸລະກິດບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;

2.2 ດຳເນີນທຸລະກິດບໍ່ສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ;

2.3 ສ້າງຄວາມເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;

2.4 ບໍ່ດຳເນີນທຸລະກິດຕໍ່ເນື່ອງເປັນເວລາ ສອງປີ.

ການໂຈະການດຳເນີນທຸລະກິດ ຕ້ອງມີກຳນົດເວລາທີ່ແນ່ນອນ ເພື່ອໃຫ້ຊອກຫາວິທີແກ້ໄຂ ຫຼື ປັບປຸງ ສາເຫດທີ່ພາໃຫ້ມີການໂຈະນັ້ນ. ຖ້າຜູ້ດຳເນີນທຸລະກິດ ຫາກບໍ່ແກ້ໄຂ ຫຼື ປັບປຸງ ພາຍໃນເວລາ ຫົກເດືອນແລ້ວ ກະຊວງພາຍໃນ ສາມາດຍົກເລີກການດຳເນີນທຸລະກິດ.

ມາດຕາ 75 ການຍົກເລີກການດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່

ການດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຈະຖືກຍົກເລີກໃນກໍລະນີ ດັ່ງນີ້:

1. ຜູ້ດຳເນີນທຸລະກິດຂໍຍົກເລີກ ໂດຍມີເຫດຜົນພຽງພໍ;

2. ກະຊວງພາຍໃນ ສັ່ງໃຫ້ຍົກເລີກດ້ວຍເຫດຜົນ ດັ່ງນີ້:

2.1 ຜູ້ດຳເນີນທຸລະກິດລະເມີດກົດໝາຍ, ລະບຽບການ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ແລະ ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;

2.2 ຜູ້ດຳເນີນທຸລະກິດບໍ່ແກ້ໄຂ ຫຼື ປັບປຸງ ຕາມການສັ່ງໂຈະ;

2.3 ສານຕັດສິນຖອນໃບອະນຸຍາດ ຫຼື ໃຫ້ລົ້ມລະລາຍ;

2.4 ຜູ້ຮັບອະນຸຍາດ ບໍ່ດຳເນີນທຸລະກິດ ພາຍຫຼັງໄດ້ຮັບອະນຸຍາດເປັນເວລາ ສອງປີ.

ມາດຕາ 76 ສິດ ແລະ ພັນທະຂອງຜູ້ດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່

ຜູ້ດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີ ສິດ ແລະ ພັນທະ ດັ່ງນີ້:

1. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;

2. ຮ້ອງທຸກຕໍ່ອົງການທີ່ມີສິດອຳນາດກ່ຽວຂ້ອງ ກ່ຽວກັບການລະເມີດກົດໝາຍ ຂອງພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3. ດຳເນີນທຸລະກິດຖືກຕ້ອງຕາມການອະນຸຍາດ, ມາດຕະຖານເຕັກນິກ ແລະ ກົດໝາຍ ຢ່າງເຂັ້ມງວດ;

4. ຝຶກອົບຮົມບຸກຄະລາກອນ ໃຫ້ມີຄວາມຮູ້, ຄວາມສາມາດ ແລະ ຄວາມຮັບຜິດຊອບ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່;

5. ປະກອບສ່ວນທາງດ້ານທຶນຮອນ ຫຼື ແຮງງານ ເຂົ້າໃນການພັດທະນາວຽກງານສໍາຫຼວດວັດແທກ ແລະ ສ້າງແຜນທີ່;

6. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ຂ່າວສານ ແລະ ອໍານວຍຄວາມສະດວກ ໃຫ້ແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

7. ໄດ້ຮັບນະໂຍບາຍປົກປ້ອງສິດອື່ນ ຢ່າງເປັນທໍາ ຕາມກົດໝາຍ;

8. ເສຍຄ່າທໍານຽມ ແລະ ຄ່າບໍລິການ ຕາມກົດໝາຍ ແລະ ລະບຽບການ;

9. ນໍາໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

# ພາກທີ VII
# ຂໍ້ຫ້າມ

## ມາດຕາ 77 ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກໍາ ດັ່ງນີ້:

1. ນໍາເອົາຂໍ້ມູນກ່ຽວກັບການສໍາຫຼວດວັດແທກ, ສ້າງແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດ ໄປນໍາໃຊ້ໃນທາງທີ່ບໍ່ຖືກຕ້ອງ ທີ່ສົ່ງຜົນສະທ້ອນຕໍ່ຄວາມໝັ້ນຄົງຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

2. ທໍາລາຍ, ມ້າງເພ, ຍົກຍ້າຍ ໂຄງລ່າງພື້ນຖານການສໍາຫຼວດວັດແທກ ເປັນຕົ້ນ ໂຄງລ່າງພື້ນຖານສໍາຫຼວດວັດແທກ, ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ;

3. ນໍາໃຊ້ໂຄງລ່າງພື້ນຖານການສໍາຫຼວດວັດແທກ, ລະບົບເຄົ້າພິກັດການສໍາຫຼວດວັດແທກ, ຂໍ້ມູນຕາໜ່າງເຄົ້າການສໍາຫຼວດວັດແທກແຫ່ງຊາດ ໂດຍບໍ່ໄດ້ຮັບອະນຸຍາດ;

4. ຂັດຂວາງການເຄື່ອນໄຫວ ແລະ ປະຕິບັດໜ້າທີ່ທາງລັດຖະການຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

5. ສວຍໃຊ້ການເຄື່ອນໄຫວວຽກງານສໍາຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ເປັນການລະເມີດກົດໝາຍ ແລະ ສ້າງຄວາມເສຍຫາຍແກ່ປະເທດຊາດ ແລະ ປະຊາຊົນ;

6. ຈັດພິມ, ຮວບຮວມ, ດັດແປງ, ສໍາເນົາຖ່າຍ, ສະໜອງ ຂໍ້ມູນ ແລະ ຜະລິດຕະພັນ ສໍາຫຼວດວັດແທກ ແລະ ແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ບໍ່ຖືກຕ້ອງ ຕາມກົດໝາຍ;

7. ດໍາເນີນການສໍາຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ມີໃບອະນຸຍາດປະກອບອາຊີບການສໍາຫຼວດວັດແທກ ແລະ ສ້າງແຜນທີ່;

8. ນໍາເຂົ້າເຄື່ອງມືສໍາຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ;

9. ສ້າງ, ນໍາໃຊ້ ແລະ ເຜີຍແຜ່ ຂໍ້ມູນການສໍາຫຼວດວັດແທກ, ສ້າງແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ເພື່ອໂຄສະນາຊວນເຊື່ອທີ່ຂັດກັບກົດໝາຍ ແລະ ລະບຽບການ;

10. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ມາດຕາ 78 ຂໍ້ຫ້າມສໍາລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກໍາ ດັ່ງນີ້:

1. ປະຕິບັດໜ້າທີ່ດ້ວຍຄວາມບໍ່ຍຸຕິທໍາ ຫຼື ລໍາອຽງ, ປະໝາດ, ເມີນເສີຍ, ຂາດຄວາມຮັບຜິດຊອບ ຫຼື ຂາດຈັນຍາບັນ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ບຸກຄົນອື່ນ;

2. ປອມແປງ, ນຳໃຊ້, ເປີດເຜີຍ, ເຜີຍແຜ່ ແລະ ສະໜອງຂໍ້ມູນ ກ່ຽວກັບການສຳຫຼວດວັດແທກ, ສ້າງແຜນທີ່ ແລະ ຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ລວມທັງເອກະສານທາງລັດຖະການທີ່ເປັນຄວາມລັບຂອງການຈັດຕັ້ງ ແລະ ຂອງຊາດໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;

3. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອບັງຄັບ, ນາບຂູ່, ໃຊ້ຄວາມຮຸນແຮງ, ແອບອ້າງ ຊື່ຜູ້ມີຖານະຕຳແໜ່ງ ຫຼື ສົມຮູ້ຮ່ວມຄິດ ກັບຜູ້ອື່ນ ເພື່ອຜົນປະໂຫຍດຂອງ ຕົນ, ພັກພວກ, ຍາດພີ່ນ້ອງ;

4. ຮັບເອົາ, ຮຽກເອົາ, ທວງເອົາສິນບົນ, ເປັນສື່ກາງໃນການໃຫ້ ຫຼື ຮັບເອົາສິນບົນ ເພື່ອຜົນປະໂຫຍດຂອງ ຕົນ, ຄອບຄົວ ແລະ ຍາດພີ່ນ້ອງ;

5. ກົດໜ່ວງ ຫຼື ຖ່ວງດຶງເອກະສານ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

### ມາດຕາ 79 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່

ຫ້າມ ຜູ້ດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ;

2. ຄອບຄອງ, ນຳໃຊ້ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ບໍ່ຜ່ານການກວດກາ ແລະ ຂຶ້ນທະບຽນ ລວມທັງການນຳເຂົ້າເຄື່ອງມືດັ່ງກ່າວ ໂດຍບໍ່ໄດ້ຮັບອະນຸຍາດ;

3. ໂຄສະນາ ເຜີຍແຜ່ ແລະ ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ທີ່ບໍ່ຜ່ານການກວດກາ, ບໍ່ຖືກຕ້ອງຕາມມາດຕະຖານເຕັກນິກ ແລະ/ຫຼື ບໍ່ໄດ້ຮັບອະນຸຍາດ;

4. ປະຕິບັດບໍ່ຖືກຕ້ອງ ຕາມແຈ້ງການ ຫຼື ຄຳແນະນຳ ຂອງອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;

5. ມອບ, ໂອນ ຫຼື ໃຫ້ຢືມ, ສຳເນົາຖ່າຍ ຂໍ້ມູນ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ;

6. ປອມແປງ, ໃຫ້ຢືມ, ໃຫ້ເຊົ່າ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບສຳຫຼວດວັດແທກ ແລະ ສ້າງແຜນທີ່;

7. ປັບແກ້, ແກະ, ລອກກາໝາຍ ມາດຕະຖານເຕັກນິກຂອງເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VIII
# ການຄຸ້ມຄອງ ແລະ ການກວດກາ
# ວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່

## ໝວດທີ 1
## ການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່

### ມາດຕາ 80 ອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງພາຍໃນ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ປະກອບດ້ວຍ:

1. ກະຊວງພາຍໃນ;
2. ພະແນກພາຍໃນ ແຂວງ, ນະຄອນຫຼວງ;
3. ຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ.

ນອກນັ້ນ, ຍັງມີຄະນະກຳມະການຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ຊຶ່ງແມ່ນການຈັດຕັ້ງບໍ່ປະຈຳການ ທີ່ໄດ້ຮັບການແຕ່ງຕັ້ງໂດຍ ນາຍົກລັດຖະມົນຕີ ຕາມການສະເໜີຂອງລັດຖະມົນຕີກະຊວງພາຍໃນ ແລະ ມີກອງເລຂາຕັ້ງຢູ່ກະຊວງພາຍໃນ, ມີພາລະບົດບາດເປັນເສນາທິການໃຫ້ລັດຖະບານ ໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດວຽກງານກ່ຽວກັບຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ. ສຳລັບໂຄງປະກອບບຸກຄະລາກອນ, ສິດ ແລະ ໜ້າທີ່ຂອງຄະນະກຳມະການຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ແລະ ກອງເລຂາ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 81 ສິດ ແລະ ໜ້າທີ່ຂອງກະຊວງພາຍໃນ**

ໃນການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ກະຊວງພາຍໃນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ເພື່ອສະເໜີລັດຖະບານພິຈາລະນາ;
2. ຫັນຂະຫຍາຍ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ເປັນແຜນການ, ແຜນງານ ແລະ ໂຄງການ ພ້ອມທັງຈັດຕັ້ງປະຕິບັດ;
3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
4. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
5. ຊີ້ນຳ, ຊຸກຍູ້, ຕິດຕາມ ກວດກາ ການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ການຈັດຕັ້ງປະຕິບັດວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃນຂອບເຂດທົ່ວປະເທດ;
6. ຄົ້ນຄວ້າສ້າງ ແລະ ປັບປຸງ ມາດຕະຖານເຕັກນິກກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ພ້ອມທັງຊຸກຍູ້, ແນະນຳ ແລະ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດມາດຕະຖານເຕັກນິກດັ່ງກ່າວ;
7. ຂຶ້ນແຜນ ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
8. ສຶກສາ, ຄົ້ນຄວ້າເຕັກນິກວິທະຍາສາດ ທີ່ທັນສະໄໝ ແລະ ກ້າວໜ້າ ເພື່ອນຳໃຊ້ເຂົ້າໃນວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
9. ສ້າງ, ຄຸ້ມຄອງ, ນຳໃຊ້ ແລະ ສະໜອງຂໍ້ມູນ ຂ່າວສານ ພູມສາດແຫ່ງຊາດ ເພື່ອຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;
10. ຂຶ້ນທະບຽນເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່, ກວດກາ ແລະ ຢັ້ງຢືນຄຸນນະພາບຂໍ້ມູນ, ຜະລິດຕະພັນ ສຳຫຼວດວັດແທກ ແລະ ສ້າງແຜນທີ່.
11. ຄຸ້ມຄອງ ແລະ ຂຶ້ນບັນຊີຜູ້ດຳເນີນທຸລະກິດ ແລະ ຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃນຂອບເຂດທົ່ວປະເທດ;

12. ເກັບຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕາມລະບຽບການ;

13. ປະສານສົມທົບກັບ ກະຊວງ, ອົງການຂອງລັດ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ລວມທັງການສຳຫຼວດວັດແທກ ແລະ ສ້າງແຜນທີ່ ທີ່ພົວພັນກັບເສັ້ນຊາຍແດນແຫ່ງຊາດ ແລະ ເຂດແດນເຊື່ອມຕໍ່;

14. ພົວພັນ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;

15. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 82 ສິດ ແລະ ໜ້າທີ່ຂອງພະແນກພາຍໃນ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ພະແນກພາຍໃນ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ, ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;

3. ຊີ້ນຳ, ຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຂອງຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ;

4. ດຳເນີນການຄຸ້ມຄອງ, ຕິດຕາມ ກວດກາການນຳໃຊ້ເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ລວມທັງການສຳຫຼວດວັດແທກ ແລະ ສ້າງແຜນທີ່ ພາຍໃນ ແຂວງ, ນະຄອນຫຼວງ;

5. ຄຸ້ມຄອງ ການສຳຫຼວດວັດແທກ ແລະ ສ້າງແຜນທີ່ພູມສັນຖານ, ແຜນທີ່ເສັ້ນເຂດແດນເຊື່ອມຕໍ່ ແລະ ຂໍ້ມູນ ຂ່າວສານ ພູມສາດ ຂອງ ແຂວງ, ນະຄອນຫຼວງ ລວມທັງການພິມຈຳໜ່າຍແຜນທີ່ ພາຍໃນແຂວງ, ນະຄອນຫຼວງ;

6. ຄຸ້ມຄອງ, ປົກປັກຮັກສາ ຂໍ້ມູນເກົ່າສຳຫຼວດວັດແທກ, ໂຄງລ່າງພື້ນຖານສຳຫຼວດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ ທີ່ຕັ້ງຢູ່ ແຂວງ, ນະຄອນຫຼວງ;

7. ຂຶ້ນແຜນ ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ ບຸກຄະລາກອນກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;

8. ເກັບຄ່າທຳນຽມ ແລະ ຄ່າບໍລິການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຕາມລະບຽບການ;

9. ປະສານສົມທົບກັບພະແນກ, ອົງການລັດທຽບເທົ່າພະແນກການຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່, ການສຳຫຼວດ ແລະ ສ້າງແຜນທີ່ ທີ່ພົວພັນກັບເສັ້ນຊາຍແດນແຫ່ງຊາດ ແລະ ເຂດແດນເຊື່ອມຕໍ່;

10. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ຕາມການມອບໝາຍ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ກະຊວງພາຍໃນ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ມາດຕາ 83 ສິດ ແລະ ໜ້າທີ່ຂອງຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ

ໃນການຄຸ້ມຄອງວຽກງານສໍາຫຼວດວັດແທກ ແລະ ສ້າງແຜນທີ່ ຫ້ອງການພາຍໃນ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສໍາຫຼວດວັດແທກ ແລະ ສ້າງແຜນທີ່;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສໍາຫຼວດວັດແທກ ແລະ ສ້າງແຜນທີ່;

3. ຊີ້ນໍາ, ຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານສໍາຫຼວດວັດແທກ ແລະ ສ້າງແຜນທີ່ ພາຍໃນ ເມືອງ, ເທດສະບານ, ນະຄອນ;

4. ຄຸ້ມຄອງ, ປົກປັກຮັກສາ ຂໍ້ມູນເຄົ້າສໍາຫຼວດວັດແທກ, ໂຄງລ່າງພື້ນຖານສໍາຫຼວດວັດແທກ ແລະ ສະຖານີອ້າງອີງການວັດແທກແບບຕໍ່ເນື່ອງ ທີ່ຕັ້ງຢູ່ ເມືອງ, ເທດສະບານ, ນະຄອນ;

5. ປະສານສົມທົບກັບຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສໍາຫຼວດວັດແທກ ແລະ ສ້າງແຜນທີ່, ການສໍາຫຼວດ ແລະ ສ້າງແຜນທີ່ ທີ່ພົວພັນກັບເສັ້ນຊາຍແດນແຫ່ງຊາດ ແລະ ເຂດແດນເຊື່ອມຕໍ່;

6. ສະຫຼຸບ ແລະ ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານສໍາຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ພະແນກພາຍໃນ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ມາດຕາ 84 ສິດ ແລະ ໜ້າທີ່ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ໃຫ້ການຮ່ວມມື ແລະ ປະສານສົມທົບກັບຂະແໜງການພາຍໃນ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ກ່ຽວກັບການຄຸ້ມຄອງວຽກງານສໍາຫຼວດວັດແທກ ແລະ ສ້າງແຜນທີ່.

## ໝວດທີ 2
## ການກວດກາວຽກງານສໍາຫຼວດວັດແທກ ແລະ ສ້າງແຜນທີ່

ມາດຕາ 85 ອົງການກວດກາ

ອົງການກວດກາວຽກງານສໍາຫຼວດວັດແທກ ແລະ ສ້າງແຜນທີ່ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສໍາຫຼວດວັດແທກ ແລະ ສ້າງແຜນທີ່ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 80 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ພົນລະເມືອງ.

**ມາດຕາ 86 ເນື້ອໃນການກວດກາ**

ການກວດກາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;

2. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຄຸ້ມຄອງວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່;

3. ການເຄື່ອນໄຫວວຽກງານ ແລະ ການດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ລວມທັງການເຄື່ອນໄຫວຂອງຜູ້ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່;

4. ການແກ້ໄຂຄຳສະເໜີຂອງພາກສ່ວນທີ່ກ່ຽວຂ້ອງກັບວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່.

**ມາດຕາ 87 ຮູບການການກວດກາ**

ການກວດກາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມແຜນການປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປົກກະຕິ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດການອກແຜນການ ຊຶ່ງແມ່ນ ການກວດກາເມື່ອເຫັນວ່າ ມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 88 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການປະຕິບັດວຽກງານສຳຫຼວດວັດແທກ ແລະ ສ້າງແຜນທີ່ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 89 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໄໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

**ມາດຕາ 90 ມາດຕະການປັບໄໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ໂດຍເຈດຕະນາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໄໝ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໄໝ 9.000.000 ກີບ ຕໍ່ຄັ້ງ;

2. ໃຫ້ຜູ້ອື່ນນຳໃຊ້ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຈະຖືກປັບໃໝ 4.500.000 ກີບ ຕໍ່ຄັ້ງ;

3. ປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 3.000.000 ກີບ ຕໍ່ຄັ້ງ;

4. ໃຫ້ຜູ້ອື່ນນຳໃຊ້ໃບອະນຸຍາດປະກອບອາຊີບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ຈະຖືກປັບໃໝ 1.500.000 ກີບ ຕໍ່ຄັ້ງ;

5. ນຳເຂົ້າ-ສົ່ງອອກເຄື່ອງມືສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ຢັ້ງຢືນຄວາມຖືກຕ້ອງທາງດ້ານເຕັກນິກ ຈະຖືກປັບໃໝ ສາມສ່ວນຮ້ອຍ (3%) ຂອງມູນຄ່າເຄື່ອງມືດັ່ງກ່າວ;

6. ສຳເນົາຖ່າຍ ແລະ ຈັດພິມ ຂໍ້ມູນກ່ຽວກັບການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 400.000 ຫາ 2.000.000 ກີບ ຕໍ່ຄັ້ງ;

7. ນຳເຂົ້າ-ສົ່ງອອກ, ສະໜອງ ຫຼື ນຳໃຊ້ ຂໍ້ມູນ, ຜະລິດຕະພັນ ການສຳຫຼວດວັດແທກ ແລະ ສ້າງແຜນທີ່ ໂດຍບໍ່ໄດ້ຮັບອະນຸຍາດຈະຖືກປັບໃໝ 250.000 ກີບ ຕໍ່ຄັ້ງ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 91 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 92 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ